# 23 ນາທີໃນນະຣົກ (ປະສົບການຂອງ ບິລ ວາຍສ໌, Bill Wiese)

## ບາງພາກສ່ວນທີ່ ບິລ ວາຍສ໌ ກ່າວຄໍາພະຍານເຖິປະສົບການໃນນະຣົກຂອງຕົນ

## ຢູ່ກອງປະຊຸມໃຫຍ່ທີ່ເມືອງແຄນສັສ ຣັດແຄນສັສ ສະຫະຣັດອະເມຣິກາ

..... ຕໍ່ໄປນີ້ທ່ານຈະໄດ້ຟັງເຣື່ອງຣາວປະສົບການໃນນະຣົກ, ສິ່ງທີ່ສໍາຄັນກວ່ານັ້ນອີກ ແມ່ນທ່ານຈະໄດ້ຍິນການຊົງ ສະຖິດຢູ່ໃກ້ຊິດກັບອົງພຣະເຢຊູຄຣິດ ແລະຄວາມຮັກທີ່ພຣະອົງຊົງມີຕໍ່ຄົນທັງໂລກ. ບິລ ວາຍສ໌ ໄດ້ຕົກນະຣົກແທ້, ເຂົາບໍ່ໄດ້ເປັນຜູ້ຄອຍສັງເກດການ ດັ່ງທີ່ຫລາຍຄົນອາດຄິດວ່າມັນເປັນພຽງມາຍາກົນ ຫລືປັ້ນເຣື່ອງຣາວຂຶ້ນມາ ເພື່ອຫລອກລວງຄົນເທົ່ານັ້ນ, ແຕ່ເຂົາໄດ້ພົບກັບການທົນທຸກທໍຣະມານໃນນະຣົກດ້ວຍຕົວເຂົາເອງເກືອບເຄິ່ງຊົ່ວໂມງ ໂດຍບໍ່ມີຄວາມຫວັງທີ່ຈະອອກຈາກທີ່ນັ້ນໄດ້....ບິລ ແລະພັນຣະຍາ, ແອັນແນັຕ ວາຍສ໌, ເຮັດວຽກກ່ຽວກັບການຊື້ຂາຍເຮືອນ, ທີ່ອໍແຣັນຄາວຕີ ຣັດກາລິຟເນັຍ. ພວກເພິ່ນທັງສອງໄດ້ຖວາຍຕົວ ແກ່ອົງພຣະເຢຊູຄຣິດ, ເຮັດວຽກງານຂອງພຣະເຈົ້າ, ແລະການຊົງນໍາຂອງອົງພຣະວິນຍານບໍຣິສຸດຢ່າງເອົາຈິງເອົາຈັງແລະຈິງໃຈອີຫລີ....

ບິລ ວາຍສ໌ (Bill Wiese): .... ພວກເຮົາບໍ່ໄດ້ມາເປີດເຜີຍປະສົບການນີ້ເພື່ອລ້ຽງຊີບ ຫລືເພື່ອເງິນຄໍາແຕ່ຢ່າງໃດ. ພວກເຮົາຮູ້ພຽງວ່າ ພຣະເຈົ້າຊົງຕ້ອງການໃຫ້ພວກເຮົາໄປເພື່ອບອກຄົນທັງໂລກທີ່ພຣະອົງຊົງຮັກ ເພື່ອບໍ່ໃຫ້ພວກ ເຂົາໄປໃນສະຖານທີ່ທີ່ພຣະອົງບໍ່ຊົງຕ້ອງການໃຫ້ພວກເຂົາໄປນັ້ນ. ເຫດຜົນນີ້ແຫລະພວກເຮົາຈຶ່ງມາທີ່ນີ້....

ກ່ອນອື່ນ ຂ້າພະເຈົ້າຢາກຖາມຄໍາຖາມທີ່ອາດຈະເກີດຂຶ້ນໃນໃຈຂອງທ່ານ ຊຶ່ງຖ້າຂ້າພະເຈົ້າຫາກຟັງສິ່ງທີ່ກໍາລັງເລົ່າສູ່ພີ່ນ້ອງຟັງນີ້ ຂ້າພະເຈົ້າກໍອາດຈະຖາມຕົນເອງວ່າ, *"ເຈົ້າຮູ້ໄດ້ແນວໃດວ່າມັນບໍ່ໄດ້ເປັນພຽງ ຄວາມຝັນ ແລະເປັນພຽງຝັນຮ້າຍເທົ່ານັ້ນ?"* ສິ່ງທີ່ຢາກຊີ້ໃຫ້ທ່ານເຫັນກ່ອນອື່ນໝົດກໍຄື ຂ້າພະເຈົ້າໄດ້ອອກ ຈາກຮ່າງກາຍຂອງຂ້າພະເຈົ້ານີ້ແທ້. ເພາະເມື່ອກັບຄືນມາຂ້າພະເຈົ້າກໍຍັງໄດ້ເຫັນຮ່າງກາຍຂອງຕົນເອງນອນປຽດຍາວຢູ່ທີ່ພື້ນຫ້ອງ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງແນ່ໃຈວ່າ ແມ່ນເປັນການອອກຈາກຮ່າງແທ້ໆ.... ຂ້າພະເຈົ້າຢາກຈະໃຫ້ພັນຣະຍາຂອງຂ້າພະເຈົ້າ, ແອນແນັດ, ຂຶ້ນມາເວົ້າສູ່ພີ່ນ້ອງຟັງວ່າ ມີຫຍັງເກີດຂຶ້ນ ເມື່ອລາວໄດ້ມາເຫັນຂ້າພະເຈົ້າຢູ່ໃນຫ້ອງຮັບແຂກ ເພາະຂ້າພະເຈົ້າບໍ່ສາມາດຈື່ຈໍາເຫດການໃນຕອນນີ້ໄດ້....

ພັນຣະຍາຂອງບິລ, ແອນແນັດ ວາຍສ໌: ເມື່ອຂ້າພະເຈົ້າຕື່ນຂຶ້ນມາ ມັນເປັນເວລາ 3:23 ໂມງເຊົ້າ, ຂ້າພະເຈົ້າຈື່ໄດ້ ເພາະໄດ້ຫລຽວເບິ່ງໂມງໃນຕອນນັ້ນ. ຂ້າພະເຈົ້າບໍ່ເຫັນ "ບິລ" ນອນຢູ່ຂ້າງໆ ແຕ່ໄດ້ຍິນສຽງຮ້ອງມາຈາກຫ້ອງຮັບແຂກ. ຂ້າພະເຈົ້າຈຶ່ງແລ່ນລົງໄປຂ້າງລຸ່ມ ແລະໄດ້ເຫັນສາມີຂອງຂ້າພະເຈົ້າຢູ່ໃນທ່າທາງທີ່ບໍ່ເຄີຍເຫັນມາກ່ອນ. ຖ້າຜູ້ໃດຫາກຮູ້ຈັກກັບ "ບິລ" ກໍຈະຮູ້ວ່າ ເຂົາມີນິສັຍແບບຄົນຫົວໂບຮານ, ໃຈເຢັນ, ແລະເປັນຄົນ ທີ່ເອົາການເອົາງານອີຫລີ. ເຂົາເປັນຄົນປະເພດທີ່ບໍ່ມັກຕື່ນເຕັ້ນຫລືມີອາຣົມກະຕືລືລົ້ນກັບ ສິ່ງໃດສິ່ງໜຶ່ງຢ່າງງ່າຍໆ, ເວັ້ນໄວ້ແຕ່ເຣື່ອງກ່ຽວກັບພຣະເຈົ້າຊຶ່ງກໍເປັນໃນບາງຄັ້ງຄາວເທົ່ານັ້ນ. ແນວໃດກໍຕາມ ຂ້າພະເຈົ້າໄດ້ເຫັນເຂົາມີ

ອາການຕື່ນຕົກໃຈຢ້ານ, ບໍ່ແມ່ນຂ້າພະເຈົ້າເວົ້າໂພດເກີນໄປ ແຕ່ເຂົາຕື່ນຕົກໃຈຢ້ານອີຫລີ, ເຂົາເອົາມືທັງສອງຂ້າງຈັບຫົວຕົນເອງ ທັງຮ້ອງສຽງດັງ. ເຂົາມີທ່າທີຄືກັນກັບເດັກນ້ອຍຄົນໜຶ່ງ ນອນຢູ່ພື້ນຫ້ອງຮັບແຂກນັ້ນ. ຂ້າພະເຈົ້າບໍ່ຮູ້ວ່າຈະເຮັດແນວໃດ. ຂ້າພະເຈົ້າຄິດວ່າເຂົາອາດເປັນຫົວໃຈວາຍ. ຂ້າພະເຈົ້າຈຶ່ງເລີ້ມອະທິຖານ ແລະເຂົາຮ້ອງສຽງດັງທັງເວົ້າວ່າ, *“ອະທິຖານໃຫ້ອົງພຣະຜູ້ເປັນເຈົ້າເອົາສິ່ງນີ້ອອກຈາກແນວຄິດຂ້ອຍແດ່! ພຣະອົງໄດ້ພາຂ້ອຍໄປນະຣົກ. ຂ້ອຍຮູ້ສຶກກຳລັງຈະຕາຍ, ຂ້ອຍທົນບໍ່ໄຫວແລ້ວ.”* ຂ້າພະເຈົ້າໄດ້ວາງມືອະທິຖານ ແລະປະມານສິບຫາຊາວນາທີ ເຂົາກໍເລີ້ມມີອາການສງົບລົງ, ແຕ່ຍັງມີທ່າທາງຕື່ນຕົກໃຈຢ້ານກົວຫລາຍຢູ່.... ມັນບໍ່ແມ່ນອາການຂອງຄົນນອນຝັນຮ້າຍແລະຫາກໍຕື່ນຂຶ້ນມາຈັກດີ້. ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍໃຫ້ການເປັນພະຍານກ່ຽວກັບເຣື່ອງນີ້.

ບິລ ວາຍສ໌: ....ເມື່ອຂ້າພະເຈົ້າກັບມາຈາກປະສົບການນີ້ແລ້ວຂ້າພະເຈົ້າກໍຢາກຮູ້ວ່າ ມີໃຜແດ່ໃນພຣະຄັມພີທີ່ເຄີຍມີປະສົບການໃນນະຣົກ. ດັ່ງນັ້ນ ຂ້າພະເຈົ້າຈຶ່ງເລີ້ມຄົ້ນຄວ້າ. ຂ້າພະເຈົ້າມັກຟັງອາຈານ ຈັກ ມິສເລີ (Chuck Missler). ເພິ່ນເປັນຜູ້ສອນພຣະຄັມພີທົ່ວປະເທດ ທັງເປັນຜູ້ຮອບຮູ້ເຣື່ອງພຣະຄັມພີຫລາຍດ້ວຍ. ເພິ່ນໄດ້ເວົ້າ ເຖິງເຣື່ອງໂຢນາຕົກນະຣົກ, ໃນໂຢນາ 2:2 ເວົ້າວ່າ, *“ຂ້າພຣະອົງຮ້ອງທູນຈາກທ້ອງຂອງນະຣົກ.”* ແລະໃນໂຢນາ 2:6 ເວົ້າວ່າ, *“ແຜ່ນດິນກັບໄລປະຕູປິດກັນຂ້າພຣະອົງໄວ້ເປັນນິດ ແຕ່ປານນັ້ນພຣະອົງຍັງຊົງນຳຊີວິດຂອງຂ້າພຣະອົງຂຶ້ນມາຈາກຄວາມເປື່ອຍເນົ່າ.”* ຢ່າງນ້ອຍກໍຍັງມີຄົນຜູ້ໜຶ່ງໃນພຣະຄັມພີທີ່ມີປະສົບການໃນນະຣົກ, ຄືໂຢນາ. ຂ້າພະເຈົ້າຍັງຕ້ອງການຢາກຮູ້ຕື່ມອີກ, ເພາະຂ້າພະເຈົ້າເຕີບໃຫຍ່ຂຶ້ນມາໃນ “ຄາວເວີຣີ ຊາແປລ/Cavalry Chapel” ສິ່ງໃດທີ່ເປັນປະສົບການຝ່າຍວິນຍານນັ້ນ ຕ້ອງມີຢູ່ໃນພຣະຄຳຂອງພຣະເຈົ້າແລ້ວ. ຖ້າສິ່ງທີ່ຂ້າພະເຈົ້າໄດ້ປະສົບມານັ້ນ ຫາກເປັນຄວາມຈິງ ຂ້າພະເຈົ້າຮູ້ວ່າ ມັນຕ້ອງມີຢູ່ແລ້ວໃນພຣະຄັມພີ. ຂ້າພະເຈົ້າຈຶ່ງເລີ້ມຊອກຫາ ແລະກໍໄດ້ພົບພຣະຄຳກວ່າ 400 ຂໍ້ຊຶ່ງໄດ້ບັນລະຍາຍເຖິງທຸກສິ່ງທີ່ຂ້າພະເຈົ້າໄດ້ເຫັນ, ໄດ້ຍິນ,ໄດ້ສັມຜັດ, ທຸກຢ່າງກ່ຽວກັບນະຣົກ; ມັນມີຢູ່ແລ້ວໃນພຣະຄັມພີ, ສິ່ງໃດກໍຕາມທີ່ຂ້າພະເຈົ້າກຳລັງບອກກັບທ່ານຢູ່ນີ້ ມັນມີຢູ່ໃນພຣະຄັມພີນັ້ນແລ້ວ. ຂ້າພະເຈົ້າບໍ່ສາມາດຈະເອົາຂໍ້ພຣະຄຳທັງໝົດທີ່ຄົ້ນພົບນັ້ນມາອ້າງອີງທີ່ນີ້ໄດ້ ແຕ່ກໍຈະນຳເອົາມາບາງຂໍ້ເທົ່ານັ້ນ. ຂ້າພະເຈົ້າຍັງພົບອີກວ່າ ມີຄົນອື່ນອີກ 14 ຄົນທີ່ໄດ້ມີປະສົບການໃນບາງ ພາກສ່ວນຂອງນະຣົກ. ສ່ວນຫລາຍໃນພວກເຫລົ່ານີ້ ແມ່ນພວກທີ່ປະສົບການໃກ້ຕາຍ, ຜູ້ທີ່ກຳລັງໃກ້ຕາຍໃນໂຮງພະຍາບານ ແລະຄືນມາມີຊີວິດອີກ....

ພັນຣະຍາແລະຂ້າພະເຈົ້າໄດ້ພາກັນໄປຮ່ວມອະທິຖານກັບບັນດາສິດຍາພິບານໃນຕອນແລງວັນອາທິດ ດັ່ງທີ່ເຄີຍເຮັດມາເປັນປະຈຳ. ພວກເຮົາໄດ້ກັບບ້ານເຊັ່ນດຽວກັບຄືນອື່ນໆທີ່ຜ່ານມາ ແລະກໍພາກັນເຂົ້ານອນ. ມັນເປັນເວລາປະມານ 3:00 ເຊົ້າທີ່ຂ້າພະເຈົ້າ ຖືກນຳໄປ. ຂ້າພະເຈົ້າບໍ່ຮູ້ວ່າໄປທີ່ນັ້ນໄດ້ແນວໃດ ຈົນກະທັ້ງກັບມາ - ອົງພຣະຜູ້ເປັນເຈົ້າໄດ້ອະທິບາຍໃຫ້ເຂົ້າໃຈ.

ຂ້າພະເຈົ້າຖືກຈັບໂຍນເຂົ້າໄປໃນຫ້ອງຂັງຊຶ່ງກໍຄືກັນກັບຫ້ອງຂັງທັມມະດານີ້ເອງ, ທ່ານຄົງນຶກພາບອອກ, ມີຝາຫີນທີ່ແໜ້ນໜາ ທັງມີກົງກັ້ນປະຕູໄວ້ອີກດ້ວຍ. ຂ້າພະເຈົ້າບໍ່ຮູ້ວ່າຢູ່ທີ່ໃດເທື່ອ. ສິ່ງທີ່ຂ້າພະເຈົ້າຮູ້ໄດ້ກໍຄືມັນຮ້ອນສຸດຮ້ອນ, ມັນຮ້ອນຫລາຍອີຫລີ, ຮ້ອນຈົນບໍ່

ໜ້າເຊື່ອວ່າ ຂ້າພະເຈົ້າມີຊີວິດຢູ່ໄດ້ແນວໃດ. ຂ້າພະເຈົ້າຢາກຈະໃຫ້ຕົນເອງເປື່ອຍໄປດ້ວຍຄວາມຮ້ອນນີ້ເສັຍເຫລືອເກີນ, ແຕ່ ຂ້າພະເຈົ້າພັດຍັງມີຊີວິດຢູ່. ມີແສງໄຟແຈ້ງຂຶ້ນແວັບໜຶ່ງຢູ່ໃນຫ້ອງ ຂ້າພະເຈົ້າເຊື່ອວ່າ ເປັນການຊົງສະຖິດຢູ່ທີ່ນັ້ນຂອງອົງພຣະຜູ້ເປັນເຈົ້າ ເພື່ອໃຫ້ຂ້າພະເຈົ້າໄດ້ເຫັນຂອບເຂດໃນທີ່ນັ້ນດີຂຶ້ນ, ແຕ່ປະມານນາທີໜຶ່ງເທົ່ານັ້ນ ແລ້ວມັນກໍມືດຕຶບລົງອີກ. ໃນພຣະທັມເອຊາຢາ 24:22 ເວົ້າວ່າ, *“ເຂົາທັງຫລາຍຈະຖືກຮວບຮວມໄວ້ດ້ວຍກັນ ດັ່ງນັກໂທດໃນຄຸກມືດ ເຂົາທັງຫລາຍຈະຖືກກັກຂັງໄວ້ໃນຄຸກ..."*; ສຸພາສິດ 7:27 ກ່າວວ່າ,*“ພວກເຂົາຈະລົງໄປສູ່ນະຣົກ ໄປສູ່ພິພົບແຫ່ງຄວາມຕາຍ."*....ໃນນະຣົກນັ້ນມີຫ້ອງຂັງຫລາຍໆຫ້ອງ, ຂຸມໄຟເປັນຂຸມໆ, ແລະມີບຶງໄຟທີ່ກວ້າງໃຫຍ່ຫລາຍບ່ອນ.... ໃນພຣະທັມ ໂຢບ 17:16 ເວົ້າວ່າ, *“ພວກເຂົາຈະລົງໄປຍັງກອນປະຕູແຫ່ງແດນມໍຣະນາ(ນະຣົກ)..."* ດັ່ງນັ້ນ ຂ້າພະເຈົ້າຈຶ່ງຂໍຢ້ຳຕື່ມອີກວ່າ ທຸກສິ່ງຢ່າງທີ່ຂ້າພະເຈົ້າເຫັນນັ້ນມີຢູ່ໃນພຣະຄຳ ຂອງພຣະເຈົ້າທັງນັ້ນ.... ຂ້າພະເຈົ້າຢູ່ໃນຫ້ອງຂັງ ແລະມີສັດຮ້າຍຢູ່ກັບຂ້າພະເຈົ້າ 4 ຕົວ. ໃນຕອນນັ້ນຂ້າພະເຈົ້າບໍ່ຮູ້ຈັກວ່າ ພວກພວກມັນເປັນຜີຊົ່ວຮ້າຍ ເພາະຂ້າພະເຈົ້າໄປທີ່ນັ້ນໃນຖານະຄົນທີ່ຍັງບໍ່ທັນໄດ້ຮັບຄວາມລອດເທື່ອ. ພຣະເຈົ້າເອົາແນວຄິດທີ່ວ່າຂ້າພະເຈົ້າເປັນຄຣິສຕຽນນັ້ນອອກໄປ. ຂ້າພະເຈົ້າກໍບໍ່ເຂົ້າໃຈວ່າເປັນຫຍັງພຣະອົງຈຶ່ງເຮັດແນວນັ້ນ, ແຕ່ ພຣະອົງກໍໄດ້ອະທິບາຍໃຫ້ເຂົ້າໃຈ ຕອນຂາກັບມາ.

ຂ້າພະເຈົ້າຄິດບໍ່ອອກວ່າ ສັດຮ້າຍເຫລົ່ານີ້ເປັນພວກຜີຊົ່ວຮ້າຍ ພວກມັນໃຫຍ່ອີຫລີ ສູງປະມານ 12 ຫາ 13 ຟີຕ, ທ່ານຈະເຫັນສັດຮ້າຍຕົວໜຶ່ງໃນວີດີໂອ. ມີຜູ້ໜຶ່ງໄດ້ເປັນພະຍານ, ມີຜູ້ໜຶ່ງໄດ້ເປັນພະຍານ, ເຂົາໄດ້ເຫັນຜີຮ້າຍຕົວດຽວກັນກັບທີ່ຂ້າພະເຈົ້າເຫັນ. ທ່ານຈະເຫັນວ່າ ມັນມີຮູບຮ່າງລັກສະນະເປັນແບບໃດ. ມັນເປັນພາບທີ່ເຫັນໄດ້ຊັດເຈນອີຫລີໃນວີດີໂອ.... ແນວໃດກໍຕາມ ມັນເປັນເກັດທັງນັ້ນ. ສັດຮ້າຍຕົວນີ້ມີເກັດທົ່ວຕົວ, ມີຄາງກະໄຕໃຫຍ່, ແຂ້ວເຫລັ້ມໃຫຍ່, ເລັບຍື່ນອອກມາ, ແລະແກ້ມໂອບ, ຕາພັດຫລຸບເຂົ້າຂ້າງໃນ. ພວກມັນສູງໃຫຍ່ອີຫລີ. ແລະອີກຕົວໜຶ່ງພັດບໍ່ຄືກັບຕົວນີ້ເລີຍ, ທຸກຢ່າງຜິດຮູບຜິດຮອຍທັງບິດບ້ຽວ, ຜິດສັດສ່ວນໄປໝົດ, ບໍ່ສົມດູນກັນເລີຍ, ແຂນໜຶ່ງຍາວກວ່າອີກແຂນໜຶ່ງ, ເປັນສິ່ງຜິດປົກກະຕິທັມດາ. ພວກມັນດູຖູກດູໝິ່ນປະໝາດ ພຣະເຈົ້າ, ແລະສາບແຊ່ງພຣະອົງຢູ່ຕລອດເວລາ. ຂ້າພະເຈົ້າຍັງສົງສັຍຢູ່ວ່າ,*“ເປັນຫຍັງພວກມັນຈຶ່ງສາບແຊ່ງພຣະເຈົ້າ? ເປັນຫຍັງພວກມັນຈຶ່ງກຽດຊັງພຣະເຈົ້າແທ້?"* ຕໍ່ຈາກນັ້ນ ພວກມັນໄດ້ຫັນຄວາມສົນໃຈມາຍັງຂ້າພະເຈົ້າ, ຂ້າພະເຈົ້າຮູ້ສຶກວ່າຄວາມກຽດຊັງທີ່ມັນມີຕໍ່ພຣະເຈົ້ານັ້ນ ພວກມັນກໍມີຕໍ່ຂ້າພະເຈົ້າຄືກັນ, ແລະຂ້າພະເຈົ້າກໍຍັງຄິດອີກວ່າ,*“ເປັນຫຍັງພວກມັນຈຶ່ງກຽດຊັງຂ້າພະເຈົ້າ? ຂ້າພະເຈົ້າຄືບໍ່ໄດ້ເຮັດຫຍັງໃຫ້ພວກມັນ?"* ແຕ່ພວກມັນກຽດຊັງຂ້າພະເຈົ້າ ເປັນຄວາມກຽດຊັງ ທີ່ຂ້າພະເຈົ້າບໍ່ເຄີຍ

ໄດ້ພົບໄດ້ເຫັນຢູ່ໃນໂລກນີ້ເລີຍ... ພວກມັນກຽດຊັງຂ້າພະເຈົ້າເອົາແທ້ເອົາວ່າ, ແລະຂ້າພະເຈົ້າ ຮູ້ວ່າ ພວກມັນຖືກແຕ່ງຕັ້ງໃຫ້ມາທາລຸນທໍຣະມານຂ້າພະເຈົ້າໂດຍສະເພາະ. ຫລາຍສິ່ງທີ່ຂ້າພະເຈົ້າກຳລັງຈະກ່າວເຖິງນີ້ ເປັນສິ່ງທີ່ຂ້າພະເຈົ້າບໍ່ເຂົ້າໃຈວ່າ ຂ້າພະເຈົ້າຮູ້ຈັກໄດ້ແນວໃດ. ເມື່ອຢູ່ໃນນະຣົກນັ້ນ ຄວາມຮູ້ສຶກຂອງຕາແລະຫູຈະໄວກວ່າຄວາມຮູ້ສຶກທີ່ພວກເຮົາມີໃນຮ່າງກາຍທັມມະດາ. ຂ້າພະເຈົ້າຮູ້ດີເຖິງໄລຍະໃກ້ໄກ, ການເວລາ, ແລະອື່ນໆຊຶ່ງເປັນຄວາມຮູ້ສຶກທີ່ດີກວ່າທີ່ພວກເຮົາສຳນຶກຮູ້ໄດ້ຢູ່ໃນໂລກນີ້.ຂ້າພະເຈົ້າຮູ້ວ່າ ທຸກຢ່າງຖືກແຕ່ງຕັ້ງມາເພື່ອທໍຣະມານຂ້າພະເຈົ້າໃນທີ່ນີ້ຕລອດໄປເປັນນິດ. ຂ້າພະເຈົ້ານອນຢຽດຍາວ ຢູ່ພື້ນພື້ນຫ້ອງຂັງນີ້ ແລະກໍບໍ່ມີເຫື່ອແຮງເລີຍແມ້ແຕ່ນ້ອຍ. ຂ້າພະເຈົ້າຄິດບໍ່ອອກວ່າ, *“ເປັນຫຍັງຂ້າພະເຈົ້າຈຶ່ງເໝັ້ງຕຶງຍາກແທ້, ມີຫຍັງຜິດປົກກະຕິເກີດຂຶ້ນກັບຂ້າພະເຈົ້າ?"* ຂ້າພະເຈົ້າຮູ້ພຽງວ່າ ຂ້າພະເຈົ້າບໍ່ມີກຳລັງເຫື່ອແຮງແລະຊ່ອຍຕົນເອງບໍ່ໄດ້ເລີຍ ໄດ້ແຕ່ນອນຢຽດຍາວຢູ່ຢ່າງນັ້ນ. ຜີຮ້າຍຕົວໜຶ່ງຈັບ ແລະຍົກຂ້າພະເຈົ້າຂຶ້ນ ແລ້ວໂຍນຖິ້ມໃສ່ຝາ ເໝືອນກັບຂ້າພະເຈົ້າເປັນຈອກໜ່ວຍໜຶ່ງເທົ່ານັ້ນ. ມັນຈັບຂ້າພະເຈົ້າ ຄືກັບຈັບເອົາຈອກ ໜ່ວຍໜຶ່ງຊຶ່ງສະແດງໃຫ້ເຫັນວ່າ ຂ້າພະເຈົ້າເບົາຊ່ຳໃດ ແລະມັນແຮງຊ່ຳໃດ. ມັນໂຍນຂ້າພະເຈົ້າໃສ່ຝາຈົນກະດູກທຸກສິ້ນໃນຮ່າງກາຍນັ້ນຫັກມຸ່ນໝົດ. ຂ້າພະເຈົ້າຮູ້ສຶກສຸດແສນເຈັບປວດ! ຂ້າພະເຈົ້ານອນຢຽດຍາວຢູ່ກັບພື້ນຫ້ອງນັ້ນ ໄດ້ແຕ່ຮ້ອງຂໍຄວາມເມດຕາ, ແຕ່ພວກຜີປີສາດເຫລົ່ານີ້ບໍ່ມີຄວາມເມດຕາຫຍັງເລີຍ, ບໍ່ມີຄວາມເມດຕາເລີຍແມ້ແຕ່ນ້ອຍເລີຍ. ຜີຕົວໜຶ່ງດຶງຂ້າພະເຈົ້າຂຶ້ນ, ອີກຕົວໜຶ່ງຊຶ່ງມີເລັບອັນແຫລມຄົມນັ້ນ ເກາະເອົາຊີ້ນຂ້າພະເຈົ້າອອກມາ ມັນບໍ່ສົນໃຈເລີຍວ່າຮ່າງກາຍອັນງົດງາມທີ່ພຣະເຈົ້າໄດ້ຊົງສ້າງຂຶ້ນມານີ້ຈະເປັນແນວໃດ. ມັນມີຄວາມກຽດຊັງຂ້າພະເຈົ້າຢ່າງຣຸນແຮງທີ່ສຸດ. ຂ້າພະເຈົ້າຍັງຄິດວ່າ,*“ເປັນຫຍັງຂ້າພະເຈົ້າຈຶ່ງຍັງມີຊີວິດຢູ່ໄດ້, ຂ້າພະເຈົ້າມີຊີວິດຢູ່ຜ່ານສິ່ງນີ້ໄດ້ແນວໃດ? ຂ້າພະເຈົ້າບໍ່ເຂົ້າໃຈເລີຍວ່າເປັນຫຍັງຂ້າພະເຈົ້າຈຶ່ງບໍ່ຕາຍ?"* ເນື້ອໜັງຂອງຂ້າພະເຈົ້າຖືກຕັດຂາດອອກເປັນຕ່ອນໆ ແຕ່ບໍ່ມີເລືອດ ມີແຕ່ຊີ້ນຈີກເປັນຕ່ອນໆ, ເພາະຊີວິດຕ້ອງມີເລືອດ ແລະຢູ່ໃນນະຣົກນັ້ນບໍ່ມີຊີວິດ, ແລະທັງບໍ່ມີນ້ຳອີກດ້ວຍ. ພວກເຮົາຮູ້ວ່າ ຜີຮ້າຍມີຄວາມແຮງຢ່າງມະຫາສານ, ໃນພຣະຄຳຂອງພຣະເຈົ້າໄດ້ເວົ້າເຖິງຄົນໆນຶ່ງ ທີ່ມີຜີຖ່ອຍຮ້າຍສິງຢູ່ໄດ້ອອກມາຈາກປ່າຊ້າ, ພຣະທັມມາຣະໂກ 5:1-4, *“....ເພາະວ່າໄດ້ໃສ່ຊືກໃສ່ໂສ້ລ່າມມັນໄວ້ຫລາຍເທື່ອແລ້ວ ແຕ່ໂສ້ນັ້ນມັນກໍເຮັດຂາດ ແລະຊືກກໍເຮັດຫັກມຸ່ນໄປ ບໍ່ມີຜູ້ໃດມີແຮງພໍທີ່ຈະບັງຄັບມັນໄວ້..."* ບໍ່ມີໃຜສາມາດມັດມັນໄວໄດ້, ມັນຫັກໂສ້ນັ້ນຂາດມຸ່ນໝົດ, ນັ້ນແຫລະ ຄືຄວາມແຮງຂອງຄົນທີ່ມີຜີຮ້າຍສິງຢູ່. ຂ້າພະເຈົ້າຄິດວ່າ ພວກຜີຮ້າຍເຫລົ່ານີ້ພຽງຕົວດຽວກໍມີກຳລັງແຮງກວ່າຄົນຜູ້ໜຶ່ງພັນເທົ່າ. ແມ້ວ່າຂ້າພະເຈົ້າຈະມີເຫື່ອແຮງແບບຄົນທັມມະດາ ຂ້າພະເຈົ້າກໍສູ້ກັບມັນບໍ່ໄດ້ຢູ່ແລ້ວ. ຂ້າພະເຈົ້າຂຶ້ນຢູ່ກັບຄວາມເມດຕາຂອງພວກມັນເທົ່ານັ້ນ ແຕ່ພວກມັນພັດບໍ່ມີຄວາມເມດຕາເລີຍ. ແມ່ນພວກຜີຮ້າຍທີ່ຄວບຄຸມຊີວິດຂອງຄົນທີ່ຢູ່ໃນນະຣົກ. ກິ່ນຂອງ ພວກຜີເຫລົ່ານີ້ ແລະກິ່ນຂອງນະຣົກນັ້ນ ມັນສຸດແສນທີ່ຈະເໝັນເນົ່າ ຂ້າພະເຈົ້າບໍ່ສາມາດຈະບັນຍາຍສິ່ງນີ້ສູ່ພວກທ່ານຟັງໄດ້. ມັນເປັນກິ່ນຂອງຊີ້ນໄໝ້, ກິ່ນຂອງມາດ. ກິ່ນຂອງຜີເຫລົ່ານີ້ເໝັນຄືຖໍ່ວິດ, ກິ່ນເໝັນເນົ່າ, ກິ່ນຊີ້ນເນົ່າ, ກິ່ນໄຂ່ເນົ່າ, ກິ່ນນົມບູດ ທຸກສິ່ງສຸດເນົ່າເໝັນ

ທີ່ທ່ານສາມາດຄິດອອກໄດ້, ເອົາຄວາມເນົ່າທັງໝົດ ນີ້ມາຮວມກັນ, ຄູນພັນເທື່ອ, ເອົາມາແປະໃສ່ດັງ, ແລ້ວສູດມັນເຂົ້າໄປໃນປອດ. ມັນເປັນພິດຮ້າຍທີ່ຂ້າທ່ານໄດ້. ຖ້າທ່ານຫາກຢູ່ໃນຮ່າງກາຍນີ້, ທ່ານຕ້ອງຕາຍຢ່າງແນ່ນອນ. ຂ້າພະເຈົ້າຍັງແປກໃຈຢູ່ວ່າ, *"ຂ້າພະເຈົ້າມີຊີວິດຢູ່ຜ່ານກິ່ນສຸດເໝັນເອົາແທ້ເອົາວ່ານີ້ໄດ້ແນວໃດ?"* ແຕ່ເຈົ້າພັດບໍ່ຕາຍ, ເຈົ້າຕ້ອງທົນທຸກທໍຣະມານຢູ່ແນວນີ້ຕລອດໄປ. ຄຳເວົ້າດູຖູກດູໝິ່ນພຣະເຈົ້າທີ່ພວກຜີເຫລົ່ານີ້ນຳເອົາມາສາບແຊ່ງປ້ອຍດ່າພຣະອົງນັ້ນໄດ້ກ່າວໄວ້ໃນພຣະທັມເອເຊກຽນ 22:26 ວ່າ, *"...ເຮົາຖືກລົບຫລູ່ດູໝິ່ນທ່າມກາງເຂົາທັງຫລາຍ...."* ການທໍຣະມານອັນໂຫດຮ້າຍທີ່ພວກຜີຮ້າຍກະທຳກັບຂ້າພະເຈົ້ານີ້ ໄດ້ກ່າວໄວ້ຢູ່ໃນພຣະທັມພຣະບັນຍັດ ສອງ 32:22-24, *"ເພາະມີໄຟກໍ່ຂຶ້ນດ້ວຍເຫດຄວາມຮ້າຍຂອງເຮົານັ້ນ ໄຟກໍໄໝ້ລຸກລາມໄປຈົນເຖິງ ກົ້ນເລິກຂອງນະຣົກເຜົາແຜ່ນດິນໂລກແລະພືດຜົນໃນນັ້ນ ແລະຈະໄໝ້ລົງໄປເຖິງຮາກພູເຂົາເຮົາຈະສຸມສິ່ງຮ້າຍໄວ້ບົນເຂົາທັງຫລາຍ ແລະປ່ອຍລູກທະນູຂອງເຮົາມາຍິງເຂົາ ເຂົາຈະຈ່ອຍຜອມໄປເພາະຄວາມຫິວ ຄວາມ ຮ້ອນອັນແຮງກ້າແລະການທຳລາຍອັນຂົມຂື່ນຈະເຜົາຜານເຂົາເສັຍ ເຮົາຈະສົ່ງແຂ້ວສັດຮ້າຍມາທຳລາຍມາທຳລາຍເຂົາ ແລະໃຫ້ງູພິດມາຂົບຕອດເຂົາ."* ດັ່ງນັ້ນ ແຂ້ວຂອງສັດຮ້າຍຈຶ່ງຂົບກັດເຈົ້າຢູ່ຕລອດ. ໃນພຣະທັມ 2 ຊາມູເອລ 22:6 ກ່າວໄວ້ວ່າ, *"ຄວາມເສົ້າໂສກແຫ່ງນະຣົກຢູ່ຮອບຕົວຂ້າພະເຈົ້າ ບ້ວງແຮ້ວແຫ່ງຄວາມຕາຍຂັດຂວາງຂ້າພະເຈົ້າ."* ແລະຢູ່ໃນພຣະທັມມີກາ 3:2 ກໍເວົ້າອີກວ່າ, *"ທ່ານທັງຫລາຍຜູ້ກຽດຊັງຄວາມດີ ແລະຮັກຄວາມຊົ່ວ ຜູ້ທີ່ຈີກໜັງອອກຈາກປະຊາຊົນຂອງເຮົາ ແລະຈີກຊີ້ນອອກຈາກກະດູກຂອງເຂົາທັງຫລາຍ."*

....ມີຄວາມເມດຕາສົງສານຢູ່ທີ່ໃດ? ຄວາມເມດຕາປານີມີຢູ່ໃນສວັນເທົ່ານັ້ນ. ຄວາມຮັກເມດຕາມາຈາກພຣະເຈົ້າ ແລະພວກຜີມານວິນຍານຊົ່ວບໍ່ມີຄວາມຮູ້ຄວາມສາມາກ່ຽວກັບປະເພດຂອງຄວາມເມດຕານີ້ຈັກຢ່າງເລີຍ, ພວກມັນເປັນສັດຕຣູກັບຄວາມເມດຕາ. ດັ່ງນັ້ນຈຶ່ງມີກ່າວໄວ້ໃນພຣະທັມເພງສັນຣະເສີນ 36:5 ວ່າ, *"ໂອ້ ຂ້າແດ່ ພຣະຜູ້ເປັນເຈົ້າ ຄວາມເມດຕາຂອງພຣະອົງຢູ່ໃນຟ້າສວັນ ຄວາມສັດຊື່ຂອງພຣະອົງໄປເຖິງເມກ."* ຄວາມເມດ ຕານັ້ນບໍ່ເຄີຍມີຢູ່ໃນນະຣົກແມ້ແຕ່ນ້ອຍດຽວເລີຍ; ແລະໃນເພງສັນຣະເສີນ 74:20 ເວົ້າວ່າ, *"ຂໍສົນພຣະທັຍໃນຄຳ ສັນຍາຂອງພຣະອົງ ເພາະສະຖານທີ່ມືດຂອງແຜ່ນດິນເຕັມໄປດ້ວຍທີ່ຢູ່ຂອງຄວາມທາຣຸນ."*

ມັນມີແຕ່ຄວາມທາຣຸນໂຫດຮ້າຍ, ນ່າລັງກຽດທີ່ສຸດ, ມັນເປັນບ່ອນທີ່ເປັນຕາຢ້ານອີຫລີ ແລະເຈົ້າຕ້ອງໄດ້ທົນທຸກຢູ່ຢ່າງນັ້ນ, ເຈົ້າຕ້ອງໄດ້ອົດທົນຢູ່ກັບສິ່ງເຫລົ່ານີ້ຕລອດໄປ. ພຣະເຈົ້າໄດ້ຊົງສ້າງມະນຸດໃຫ້ມີແບບຟອມຢູ່ໃນລະດັບສູງ ແຕ່ຜີຮ້າຍເຫລົ່ານີ້ຢູ່ໃນແບບຟອມຂັ້ນຕ່ຳສຸດ. ໃນຖາ ນະທີ່ເປັນມະນຸດ, ພວກເຮົາເຮັດວຽກໜັກເພື່ອຄວາມກ້າວໜ້າໃນຊີວິດ, ເຮັດໃຫ້ຕົວເອງດີຂຶ້ນ, ແລະສຶກສາຮຽນຮູ້. ແຕ່ໃນນະຣົກ, ຊີວິດຂອງເຈົ້າຖືກຄວບຄຸມໂດຍພວກຜີຮ້າຍ. ພວກຜີປີສາດເຫລົ່ານີ້ມີ "ໄອຄິວ" ທີ່ເປັນສູນ, ເປັນຜີຮ້າຍທີ່ບໍ່ມີຄວາມສລາດແມ້ແຕ່ນ້ອຍເລີຍ, ມັນໂງ່ສຸດໂງ່. ສິ່ງທີ່ພວກມັນຮູ້ ກໍຄືຄວາມກຽດຊັງ ແລະການທໍຣະມານທີ່ມີໃຫ້ເຈົ້າເທົ່ານັ້ນ. ພວກມັນບັນຊາຊີວິດຂອງເຈົ້າ ແລະເຈົ້າເຮັດຫຍັງບໍ່ໄດ້ຈັກຢ່າງເລີຍ. ມີພຣະຄຳຂອງພຣະເຈົ້າທີ່ເວົ້າເຖິງການຍອມຈຳນົນຂອງເຈົ້າທີ່ຕ້ອງໄດ້ທົນຍອມຕລອດໄປໃນ

ພຣະທັມເອຊາຢາ 5:14-15 , 57:9-16, ເອເຊກຽນ 32:24. ມັນຈະເປັນໄປແນວນີ້ແຫລະຕລອດໄປ, ມັນເປັນສິ່ງທີ່ໜ້າຢ້ານກົວອີຫລີ ທີ່ເຈົ້າຕ້ອງມີຊີວິດຢູ່ດ້ວຍການຄວບຄຸມຂອງຜີຮ້າຍເຫລົ່ານີ້, ຜີຊຶ່ງບໍ່ມີຄວາມເມດຕາປານີໃຫ້ແກ່ເຈົ້າແມ້ແຕ່ນ້ອຍເລີຍ.

**ຄວາມມືດແລະສຽງຮ້ອງໃນນະຣົກ:** ຂ້າພະເຈົ້ານອນຢູ່ໃນຫ້ອງຂັງ, ມັນມືດລົງ, ມືດສຸດມືດອີຫລີ, ເປັນຄວາມມືດທີ່ຂ້າພະເຈົ້າບໍ່ເຄີຍພົບພໍ້ມາກ່ອນ ເລີຍຢູ່ໃນໂລກນີ້.... ມັນເປັນຄວາມມືດທີ່ເຈົ້າຄຶດບໍ່ອອກເລີຍວ່າມັນຈະມືດໄດ້ຂນາດນັ້ນ. ຂ້າພະເຈົ້າເລີ້ມຫາທາງຄານອອກ; ດ້ວຍເຫດຜົນໃດບໍ່ຮູ້ ຂ້າພະເຈົ້າສາມາດຄານອອກໄປໄດ້ ປາກົດວ່າພວກມັນກໍປ່ອຍໃຫ້ຂ້າພະເຈົ້າເຮັດແນວນັ້ນດ້ວຍ. ຂ້າພະເຈົ້າຈື່ວ່າປະຕູຢູ່ໃສ, ຂ້າພະເຈົ້າຈຶ່ງຄານອອກໄປ ແລະກໍພົບທາງອອກ, ແລະຂ້າພະເຈົ້າກໍອອກມາຢູ່ນອກຫ້ອງຂັງໄດ້. ຂ້າພະເຈົ້າໄດ້ຫລຽວເບິ່ງໄປຂ້າງໜ້າ ມັນດຳມືດສນິດເລີຍ. ສິ່ງທີ່ຂ້າພະເຈົ້າໄດ້ຍິນ ກໍຄືສຽງຮ້ອງ, ເປັນສຽງ ຮ້ອງທີ່ດັງຂອງຄົນເປັນຈຳນວນໂກດໆຢູ່ໃນທີ່ແຫ່ງນີ້. ຂ້າພະເຈົ້າຮູ້ວ່າ ມີຄົນເປັນໂກດໆ, ເພາະສຽງນັ້ນດັງສນັ່ນຫວັ່ນໄຫວອີຫລີ. ຖ້າທ່ານຫາກເຄີຍໄດ້ຍິນ ສຽງຮ້ອງດັງໆຂອງຄົນໜຶ່ງຄົນໃດມາກ່ອນ ກໍຈະຮູ້ວ່າມັນກະທົບກັບເສັ້ນປະສາດຫລາຍຊ່ຳໃດ. ແຕ່ຖ້າທ່ານຫາກໄດ້ຍິນສຽງຄົນເປັນໂກດໆຮ້ອງພ້ອມກັນ ທ່ານກໍຄົງຄຶດບໍ່ອອກວ່າ ມັນຈະກະທົບເສັ້ນປະສາດຂອງທ່ານຫລາຍປານໃດ. ທ່ານຈະທົນບໍ່ໄດ້ເລີຍ ແລະຕ້ອງໄດ້ເອົາມືອັດຫູທັງສອງຂ້າງໄວ້ ເພາະມັນດັງແຮງອີຫລີ ດັງຈົນແສບເຂົ້າຮອດແກ້ວຫູ. ທ່ານບໍ່ສາມາດໜີຈາກສຽງຮ້ອງເຫລົ່ານີ້ໄດ້ອີກດ້ວຍ. ຄວາມຢ້ານທີ່ປົກຄຸມເຈົ້າຢູ່ນັ້ນມັນເປັນຄວາມຢ້ານທີ່ເຫລືອເຊື່ອອີຫລີ. ທຸກສິ່ງຢ່າງໃນທີ່ນີ້ປົກຄຸມດ້ວຍຄວາມຢ້ານກົວ. ບໍ່ມີການຊົງສະຖິດຢູ່ຂອງພຣະເຈົ້າ ໃນສະຖານທີ່ນີ້ເລີຍ, ທ່ານຈະຕ້ອງອົດທົນຕໍ່ຄວາມຢ້ານກົວ, ຄວາມທຸກທໍຣະມານ, ແລະຄວາມມືດມົນຢູ່ຢ່າງນີ້ຕລອດໄປ. ມັນມືດຈົນທ່ານບໍ່ສາມາດຈະຫລຽວເຫັນສິ່ງໃດໄດ້ເລີຍ ບໍ່ເຫັນແມ້ກະທັ້ງສິ່ງທີ່ມາຂວາງໜ້າທ່ານ. ພຣະຄຳໄດ້ເວົ້າເຖິງຄວາມມືດນີ້ໄວ້ໃນພຣະທັມເພງສັນຣະເສີນ 88:6 ວ່າ, *"ພຣະອົງຊົງໃສ່ຂ້າພຣະອົງໄວ້ໃນສ່ວນເລິກຂອງປາກແດນຜູ້ຕາຍ ໃນແດນທີ່ມືດແລະເລິກ"*....

**ຄວາມຢ້ານກົວໃນນະຣົກ:** ຄວາມຢ້ານນັ້ນມີອຳນາດຍິ່ງໃຫຍ່ບີບຄັ້ນເຈົ້າຢູ່. ຖ້າເຈົ້າຫາກເອົາໜັງເຣື່ອງທີ່ເປັນຕາຢ້ານທີ່ສຸດ ຢ້ານຈົນຄໍຫອຍຕີບຕັນ ເອົາຄວາມຢ້ານນັ້ນມາຄູນໃຫ້ພັນເທື່ອ ແລ້ວເອົາມາຈ້ອງ ເບິ່ງ, ນັ້ນແຫລະ ຄືສິ່ງທີ່ເຈົ້າຕ້ອງປະເຊີນຢູ່ຕລອດເວລາ.... ພຣະທັມເອຊາຢາ 24:17-19 ໄດ້ກ່າວເຖິງສິ່ງທີ່ເຮົາຕ້ອງໄດ້ທົນທຸກຢູ່ໃນນະຣົກ....ໃນພຣະທັມໂຢບ 18:14 ເວົ້າວ່າ - ທາງຂອງຄົນຊົ່ວ ຄືການປະຕິເສດອົງພຣະຜູ້ເປັນເຈົ້າ, ແນ່ນອນວ່າ ຜີຊົ່ວຮ້າຍແມ່ນກະສັດແຫ່ງຄວາມໜ້າຢ້ານກົວ.

**ຄວາມໂດດດ່ຽວປ່ຽວພອຍໃນນະຣົກ:** ໃນຕອນນີ້ ຂ້າພະເຈົ້າຢູ່ນອກຫ້ອງຂັງແລ້ວ, ເມື່ອຫລຽວເບິ່ງໄປຂ້າງໜ້າ ກໍສາມາດຫລຽວເຫັນແປວໄຟຊຶ່ງຢູ່ຫ່າງຈາກຂ້າພະເຈົ້າໄປປະມານ 10 ໄມ. ຂ້າພະເຈົ້າຮູ້ວ່າແມ່ນ 10 ໄມ. ແລະຫລຸມໄຟນະຣົກນັ້ນກວ້າງປະມານ 3 ໄມ ຊຶ່ງມີແປວໄຟພຸ່ງສູງຂຶ້ນສູ່ທ້ອງຟ້າ ເຮັດໃຫ້ສາມາດເຫັນຂອບເຂດຂອງນະຣົກນັ້ນໄດ້ພໍມົວໆ.

ຄວາມຕຶບໜາຂອງຄວາມມືດນັ້ນໄດ້ປົກຄຸມຄວາມສວ່າງທັງໝົດ, ແຕ່ກໍຍັງພໍຫລຽວເຫັນຂອບຟ້າບາງບ່ອນໄດ້ຢູ່. ສີນໍ້າຕານປົກຄຸມໄປທົ່ວ ມັນຊ່າງໂດດດ່ຽວວັງເວງອີຫລີ. ໝາຍຄວາມວ່າ ມັນຕັ້ງບໍ່ມີໃບໄມ້ສີຂຽວແມ້ແຕ່ໃບດຽວ, ບໍ່ມີສິ່ງໃດມີຊີວິດຢູ່ໃນທີ່ນັ້ນເລີຍ. ມັນມີພຽງກ້ອນຫີນ, ຂີ້ຝຸ່ນ, ທ້ອງຟ້າສີດໍາ, ແລະໝອກມືດມົວປົກຄຸມໄປທົ່ວທ້ອງຟ້າ. ແປວໄຟນັ້ນກໍສູງອີຫລີ ສູງຈົນຂ້າພະເຈົ້າສາມາດ ຫລຽວເຫັນມັນໄດ້. ພຣະຄໍາຂອງພຣະເຈົ້າໃນພຣະບັນຍັດສອງ 29:23 ກ່າວວ່າ, *"...ແຜ່ນດິນທັງໝົດແຫ້ງແລະແຂງເປັນດິນດາກ, ເປັນເກືອ, ແລະຖືກເຜົາໄຟ ບໍ່ມີໃຜປູກຫວ່ານແລະບໍ່ມີສິ່ງໃດງອກຂຶ້ນ ເປັນບ່ອນທີ່ຫຍ້າບໍ່ເກີດ...."* ບໍ່ມີສິ່ງທີ່ມີຊີວິດໃດໆຢູ່ໃນນະຣົກ ນັ້ນເລີຍ. ມັນເປັນໂລກທີ່ບໍ່ທັມດາ ໂລກທີ່ບໍ່ມີສິ່ງໃດມີຊີວິດຢູ່ໃນນັ້ນ. ໂລກທີ່ພວກເຮົາອາສັຍຢູ່ນີ້ ພວກເຮົາສນຸກເພີດເພີນຢູ່ກັບຕົ້ນໄມ້ ໃບຫຍ້າ ແລະອາກາດທີ່ສົດໃສ, ແຕ່ຢູ່ນະຣົກນັ້ນ ມີແຕ່ສິ່ງທີ່ຕາຍແລ້ວທັງນັ້ນ.

**ຄວາມຮ້ອນເອົ້າ:** ຄວາມຮ້ອນນັ້ນແຮງກ້າອີຫລີ, ຮ້ອນຈົນບໍ່ສາມາດບັນຍາຍໄດ້. ມີກ່າວໄວ້ຢູ່ໃນພຣະບັນຍັດສອງ 32:24 ວ່າ, *"ເຂົາຈະຈ່ອຍຜອມ ຍ້ອນຄວາມອຶດຢາກ, ຄວາມຮ້ອນອັນແຮງກ້າ, ແລະການທໍາລາຍອັນຂົມຂື່ນ ເຮົາຈະສົ່ງຟັນສັດຮ້າຍມາທໍາລາຍເຂົາ, ແລະໃຫ້ງູພິດມາຂົບຕອດເຂົາ",* ແລະຍັງມີກ່າວໄວ້ໃນພຣະທັມ ຢູດາ1:7 ແລະເພງສັນຣະເສີນ 11:6 ອີກດ້ວຍ.

ນີ້ຄືສິ່ງທີ່ເປັນໄປໃນນະຣົກ, ມັນຮ້ອນສຸດຮ້ອນອີຫລີ. ສິ່ງທັງໝົດເຫລົ່ານີ້ ສາມາດຂ້າເຈົ້າໃຫ້ຕາຍໄດ້ ແຕ່ເຈົ້າພັດບໍ່ຕາຍ!... ຂ້າພະເຈົ້າ ຕ້ອງການສັນຕິສຸກໃນຈິດໃຈ, ຢາກໜີໄປພົ້ນຈາກສຽງຮ້ອງສຽງຄາງເຫລົ່ານີ້, ແລະອອກໜີໄປໃຫ້ພົ້ນຈາກທີ່ນັ້ນ....ແຕ່ໃນນະຣົກນັ້ນ ເຈົ້າຕ້ອງອົດທົນຕໍ່ສຽງຮ້ອງ ແລະການທໍຣະມານທັງໝົດເຫລົ່ານີ້, ແລະເຈົ້າກໍບໍ່ມີວັນທີ່ໜີອອກໄປຈາກນະຣົກນີ້ໄດ້ຈັກເທື່ອເລີຍ.

ໃນພຣະທັມ ເອຊາຢາ 57:21 ເວົ້າວ່າ, *"ບໍ່ມີສັນຕິສຸກແກ່ຄົນຊົ່ວຮ້າຍ."* ການເປືອຍກາຍກໍເປັນອີກສິ່ງໜຶ່ງທີ່ທ່ານຕ້ອງໄດ້ອົດທົນຢູ່ໃນ ນະຣົກ....ພຣະທັມ ເອເຊກຽນ 32:24 ໄດ້ເວົ້າເຖິງກ່ຽວກັບຄວາມລະອາຍນີ້ ແລະພຣະທັມໂຢບ26:6 ກ່າວວ່າ, *"ນະຣົກເປືອຍຢູ່ຕໍ່ພຣະພັກພຣະເຈົ້າແລະແດນແຫ່ງຄວາມພິນາດບໍ່ມີຜ້າປົກບັງ."* ໝາຍຄວາມວ່າ ພຣະເຈົ້າສາມາດເຫັນນະຣົກ ແລະພຣະອົງຊົງສັງເກດເຫັນ ນະຣົກໄດ້ຕລອດເວລາ....

**ຄວາມແຫ້ງແລ້ງ:** ຢູ່ໃນນະຣົກນັ້ນ ບໍ່ມີນໍ້າແມ້ແຕ່ພຽງຢາດດຽວເລີຍ, ບໍ່ມີນໍ້າເລີຍ. ບໍ່ມີຄວາມຊຸ່ມຊື່ນໃນອາກາດ ແລະບໍ່ວ່າ ຈະເປັນ ນໍ້າປະເພດໃດກໍຕາມ ຈະບໍ່ມີເລີຍໃນນະຣົກ. ມັນຊ່າງແຫ້ງແລ້ງເຫລືອເກີນ, ແລະແມ້ແຕ່ນໍ້າສັກຢາດດຽວ - ພຽງຢາດດຽວເທົ່ານັ້ນກໍສາມາດເຮັດໃຫ້ເຈົ້າເປັນບ້າຍ້ອນມັນໄດ້. ສິ່ງນີ້ໄດ້ກ່າວໄວ້ໃນພຣະທັມລູກາ 16:23-24. ....ເສດຖີຕ້ອງການລາຊະໂຣພຽງແຕ່ເອົາປາຍນີ້ວຈຸ່ມນໍ້າແລ້ວນໍາໄປຢອດໃສ່ປາກຂອງເຂົາ, ພຽງແຕ່ຢອດດຽວເທົ່ານັ້ນ. ນໍ້າຢາດດຽວກໍເປັນສິ່ງທີ່ມີຄຸນຄ່າມະຫາສານ ແຕ່ເຈົ້າຈະບໍ່ໄດ້ພົບນໍ້າແມ້ແຕ່ພຽງຢາດດຽວເລີຍ. ມັນຍາກທີ່ຈະຄິດວາດພາບອອກໄດ້ວ່າ ປາກຂອງເຈົ້ານັ້ນ ມັນສຸດແຫ້ງແສນແຫ້ງຂນາດໃດ. ຖ້າເຈົ້າຫາກຄິດສ້າງພາບອອກມາໄດ້ກໍຄືຄິດເຖິງການແລ່ນມາຣາທອນຜ່ານທຸບເຂົາແຫ່ງຄວາມຕາຍ ມີນວນຝ້າຍຢູ່ໃນປາກ ແລະແລ່ນວົນວຽນ

ຢູ່ທີ່ນັ້ນເປັນຫລາຍໆວັນ, ມັນກໍເປັນແນວນັ້ນແຫລະ, ມັນແຫ້ງສຸດແຫ້ງອີຫລີ, ສິ້ນຫວັງແມ້ແຕ່ນ້ຳພຽງຢາດດຽວ. ສິ່ງໜຶ່ງອີກທີ່ພຣະທັມ ລູກາ 16:23-24 ນີ້ໄດ້ເປີດເຜີຍໃຫ້ຂ້າພະເຈົ້າຮູ້ກໍຄື ມີເຫວໃຫຍ່ກັ້ນຣະຫວ່າງພວກເຂົາທັງສອງ ຄືຣະຫວ່າງແດນສຸຂເສີມ ແລະແດນທຸຣະເວທະນາ. ເສດຖີນັ້ນໄດ້ຫລຽວເຫັນອັບຣາຮາມແຕ່ໄກ, ຄວາມຈິງແລ້ວ ເສດຖີຈື່ລາຊາໂຣ ແລະອັບຣາຮາມໄດ້ແນວໃດ? ເຂົາບໍ່ເຄີຍພົບເຫັນອັບຣາຮາມມາກ່ອນ ແລະອີກຢ່າງໜຶ່ງການເຫັນຄົນໃດຄົນໜຶ່ງແຕ່ໄກໆນັ້ນ ທ່ານກໍຄົງບໍ່ຄ່ອຍອາດຮູ້ໄດ້ວ່າໃຜເປັນໃຜກັນແທ້. ແຕ່ຢູ່ໃນນະຣົກ ທ່ານສາມາດຮູ້ໄດ້ວ່າສິ່ງໃດເປັນສິ່ງໃດ. ດັ່ງທີ່ຂ້າພະເຈົ້າໄດ້ເວົ້າມາແລ້ວວ່າ ທ່ານເຂົ້າໃຈຄວາມເລິກ, ໃກ້ໄກເທົ່າໃດ, ແລະອື່ນໆອີກ. ແລ້ວຜີຮ້າຍຕົວໜຶ່ງໃນພວກມັນເຫລົ່ານັ້ນ ກໍມາດຶງລາກເອົາຂ້າພະເຈົ້າກັບຄືນເຂົ້າໄປໃນຫ້ອງຂັງ ແລະເລີ້ມຕົ້ນທໍຣະມານຕ່າງໆນາໆນັ້ນອີກ. ຂ້າພະເຈົ້າບໍ່ຢາກຈະເວົ້າເຖິງສິ່ງທີ່ເກີດຂຶ້ນນີ້ເລີຍ ເພາະຂ້າພະເຈົ້າບໍ່ຢາກຮື້ຟື້ນຊີວິດທີ່ທໍຣະມານນີ້ຂຶ້ນມາອີກ. ພວກມັນເລີ້ມກະທືບກະໂຫລກຫົວຂອງຂ້າພະເຈົ້າ. ຜີຊົ່ວຮ້າຍຕົວໜຶ່ງໄດ້ດຶງເອົາຂ້າພະເຈົ້າ ແລະພະຍາຍາມກະທືບຫົວຂອງຂ້າພະເຈົ້າ. ຂ້າພະເຈົ້າແຜດສຽງຮ້ອງໝົດແຮງ ແລະຮ້ອງຂໍຄວາມເມດຕາ ແຕ່ບໍ່ມີຄວາມເມດຕາເລີຍ. ເກືອບທັນໃດນັ້ນເອງ ພວກມັນພາກັນຈັບເອົາແຂນແລະຂາແຕ່ລະຂ້າງຂອງຂ້າພະເຈົ້າ ແລະເກືອບຈະຈີກໃຫ້ຂາດອອກຈາກກັນ. ຂ້າພະເຈົ້າຄິດໃນໃຈວ່າ, *"ຂ້ອຍບໍ່ສາມາດທົນກັບສິ່ງນີ້ໄດ້ອີກແລ້ວ, ຂ້ອຍທົນບໍ່ໄດ້ອີກແລ້ວ!"*

**ໃກ້ກັບຫລຸມນະຣົກ:** ແຕ່ທັນໃດນັ້ນເອງ ສິ່ງໜຶ່ງໄດ້ຄວ້າເອົາຂ້າພະເຈົ້າໄວ້ ແລະດຶງເອົາຂ້າພະເຈົ້າອອກຈາກຫ້ອງຂັງນີ້. ຂ້າພະເຈົ້າຄິດວ່າ ແມ່ນອົງພຣະຜູ້ເປັນເຈົ້າ ແຕ່ກໍ່ບໍ່ແນ່ໃຈ. ຂ້າພະເຈົ້າຢູ່ທີ່ນັ້ນໃນຖານະຄົນທີ່ຍັງບໍ່ໄດ້ຮັບຄວາມລອດເທື່ອ; ດັ່ງນັ້ນ ຂ້າພະເຈົ້າຈຶ່ງບໍ່ຮູ້ສິ່ງເຫລົ່ານີ້ໄດ້. ຂ້າພະເຈົ້າໄປທີ່ນັ້ນເໝືອນກັບຄົນທີ່ບໍ່ເຄີຍໄດ້ຮັບເອົາອົງພຣະຜູ້ເປັນເຈົ້າມາກ່ອນເລີຍ.

ຂ້າພະເຈົ້າຖືກນຳເອົາໄປໄວ້ໃກ້ໆກັບແປວໄຟທີ່ຂ້າພະເຈົ້າຫລຽວເຫັນນັ້ນ. ຂ້າພະເຈົ້າຢູ່ລຽບແຄມປາກຫລຸມນັ້ນ. ຂ້າພະເຈົ້າຢູ່ໃຕ້ຖ້ຳແຫ່ງໜຶ່ງ ເປັນເໝືອນຖ້ຳໃຫຍ່ໆບ່ອນໜຶ່ງ, ມີອຸໂມງສູງຊັນຂຶ້ນໄປ. ລຽບຕາມແຄມບຶງໄຟໂດຍຜ່ານແປວໄຟທີ່ລຸກໄໝ້ຢູ່ນັ້ນ ຂ້າພະເຈົ້າສາມາດຫລຽວເຫັນຮູບຮ່າງຂອງບັນດາຮ່າງກາຍມະນຸດຢູ່ໃນໄຟນັ້ນ, ພວກເຂົາພາກັນຮ້ອງສຽງດັງ, ຮ້ອງຂໍຄວາມເມດຕາປານີ, ພວກເຂົາຖືກເຜົາໄໝ້ຢູ່ໃນທີ່ນີ້. ຂ້າພະເຈົ້າບໍ່ຕ້ອງການຈະໄປທີ່ນັ້ນເລີຍ. ຄວາມເຈັບປວດທີ່ຂ້າພະເຈົ້າໄດ້ອົດທົນຜ່ານມານັ້ນ ມັນຮ້າຍແຮງພໍແລ້ວ; ແຕ່ຂ້າພະເຈົ້າຮູ້ດີວ່າ ຄວາມຮ້ອນຈາກແປວໄຟນັ້ນຍິ່ງຮ້າຍແຮງກວ່ານັ້ນອີກ. ຝູງຄົນເຫລົ່ານີ້ພາກັນຮ້ອງທຸກ ຂໍອອກໄປຈາກທີ່ນັ້ນ. ພວກຜີຊົ່ວຮ້າຍທີ່ໃຫຍ່ມະຫຶມາເຫລົ່ານີ້ ຕ່າງພາກັນລຽນແຖວຢູ່ອ້ອມປາກຂຸມໄຟນະຣົກແຫ່ງນີ້, ແລະເມື່ອໃຜກໍຕາມຫາກພະຍາຍາມປີນຂຶ້ນມາເພື່ອອອກຈາກຫລຸມນີ້ໄປ ພວກເຂົາກໍຖືກຖີບໃຫ້ຕົກຄືນລົງໄປສູ່ບຶງໄຟນັ້ນອີກ ແລະພວກເຂົາຈະບໍ່ໄດ້ຮັບອະນຸຍາດໃຫ້ອອກໄປຈາກທີ່ນັ້ນເລີຍ. ຂ້າພະເຈົ້າໄດ້ແຕ່ຄິດວ່າ, *"ໂອ, ບ່ອນນີ້ຕັ້ງເປັນຕາຢ້ານແທ້ໆ, ມັນເປັນໜ້າຢ້ານເກີວອີຫລີ."* ມັນເກີດຂຶ້ນກັບເຈົ້າພ້ອມໆກັນ ຄືທັງຫິວນ້ຳ, ຫິວເຂົ້າ, ແລະທັງສຸດແສນເມື່ອຍລ້າອ່ອນແຮງ. ໃນນະຣົກນັ້ນ ເຈົ້ານອນບໍ່ໄດ້ ທັງໆທີ່ເຈົ້າຕ້ອງການນອນຄືກັນກັບເຮົາຕ້ອງ

ການນອນໃນຂະນະນີ້. ຮ່າງກາຍຂອງເຈົ້າຕ້ອງການພັກຜ່ອນຫລັບນອນ. ພຣະທັມພຣະນິມິດ 14:11 ເວົ້າວ່າ, *"ຄວັນແຫ່ງການທໍຣະມານຂອງເຂົາກໍພຸ່ງຂຶ້ນຕລອດໄປເປັນນິດ ຄົນທັງຫລາຍທີ່ບູຊາສັດຮ້າຍ ແລະຮູບຂອງມັນ ກັບຜູ້ທີ່ຮັບເຄື່ອງໝາຍຊື່ຂອງມັນນັ້ນ ຈະບໍ່ມີເວລາພັກຜ່ອນທັງກາງເວັນແລະກາງຄືນ."* ບໍ່ມີຍາມທີ່ທ່ານຈະໄດ້ຫລັບໄດ້ນອນເລີຍ. ລອງຄິດເບິ່ງວ່າ ເປັນໄປໄດ້ແນວໃດທີ່ບໍ່ໄດ້ນອນເລີຍຕລອດໄປ. ກ່ຽວກັບນ້ຳນັ້ນ ມີກ່າວໄວ້ຢູ່ໃນພຣະທັມເສກາຣີຢາ 9:11 ວ່າ, *"...ເຮົາຈະປົດປ່ອຍຊະເລີຍໃນພວກເຈົ້າໃຫ້ອອກຈາກບໍ່ທີ່ບໍ່ມີນ້ຳນັ້ນ."* ໃນນະຣົກນັ້ນ ບໍ່ມີນ້ຳເລີຍ.

ຂ້າພະເຈົ້າຮູ້ວ່າ, ນະຣົກແມ່ນຕັ້ງຢູ່ໃນໃຈກາງຂອງແຜ່ນດິນໂລກນີ້. ຂ້າພະເຈົ້າເຂົ້າໃຈວ່າ ຕົນຢູ່ເລິກລົງໄປຈາກໜ້າດິນປະມານ 3,700 ໄມ. (ເສັ້ນຜ່ານສູນໃຈກາງແຜ່ນດິນໂລກ ແມ່ນ 8,000 ໄມ. ເຄິ່ງໜຶ່ງກໍປະມານ 4,000) ນັ້ນກໍຄື ຂ້າພະເຈົ້າຢູ່ໃຕ້ແຜ່ນດິນໂລກປະມານ 3,700 ໄມ. ພຣະທັມເອເຟໂຊ 4:9 ກ່າວໄວ້ວ່າ ພຣະເຢຊູໄດ້ລົງໄປສູ່ເບື້ອງຕ່ຳຂອງແຜ່ນດິນໂລກ. ໃນພຣະທັມຈົດບັນຊີ 16:32 ກ່າວວ່າ, *"ແລະແຜ່ນທໍຣະນີກໍ ອ້າປາກອອກກືນເຂົາທັງຫລາຍກັບຄອບຄົວ ແລະສິ່ງຂອງທັງໝົດຂອງເຂົາ."* ນັ້ນແຫລະ ຄືບ່ອນຢູ່ຂອງນະຣົກໃນເວລານີ້....

ຜີຊົ່ວຮ້າຍ: ... ຂ້າພະເຈົ້າໄດ້ເຫັນພວກຜີຊົ່ວຮ້າຍທັງໝົດເຫລົ່ານີ້ ລຽນກັນເປັນແຖວລຽບໄປຕາມກຳແພງ, ພວກມັນມີທຸກຂນາດ ແລະຫລາຍຮູບລັກສະນະແຕກຕ່າງກັນໄປ, ພວກຜີເສີຍໂສມຜິດຮູບຜິດຮ່າງ, ເປັນຜີຮ້າຍທີ່ໜ້າລັງກຽດທີ່ສຸດ....ເປັນສິ່ງມີຊີວິດທີ່ພິກົນພິການ ບິດບ້ຽວຄົດງໍ- ມີທັງຂນາດໃຫຍ່ມະຫຶມາແລະຂນາດນ້ອຍ. ມີຝູງແມງມູມ ໃຫຍ່ ພວກມັນໃຫຍ່ອີຫລີ, ໜູໃຫຍ່ສູງ 5 ຟີດ, ງູ, ຕົວໜອນ, ພຣະຄັມພີໄດ້ເວົ້າເຖິງ ພວກໜອນເຫລົ່ານີ້ໃນພຣະທັມເອຊາຢາ 14:11 ວ່າ, *"...ຕົວໜອນຈະເປັນທີ່ນອນຢູ່ໃຕ້ຕົວເຈົ້າ ແລະຕົວໜອນຈະເປັນຜ້າຫົ່ມຂອງເຈົ້າ."* ພວກມັນມີສາຣະພັດປະເພດຜີທີ່ສຸດແສນຊົ່ວຮ້າຍ ເປັນຕາຢ້ານເຕັມໄປໝົດ ແລະພວກມັນຖືກລ່າມໂສ້ຕິດຢູ່ກັບກຳແພງ. ຂ້າພະເຈົ້າຍັງຄິດສົງສັຍຢູ່ວ່າ, *"ເປັນຫຍັງພວກຜີເຫລົ່ານີ້ຈຶ່ງຖືກລ່າມໂສ້ຕິດກັບຝາຄືແນວນີ້?"*. ຂ້າພະເຈົ້າບໍ່ເຂົ້າໃຈສິ່ງນີ້ ແຕ່ພຣະຄັມພີເວົ້າເຖິງເຣື່ອງນີ້ຢູ່ໃນພຣະທັມຢູດາ 1:6 *"... ພຣະອົງໄດ້ຊົງເອົາໂສ້ອັນຕລອດໄປລ່າມເຂົາໄວ້ແລະຂັງໄວ້ໃຕ້ທີ່ມືດ ຈົນກວ່າຈະເຖິງເວລາພິພາກສາໃນວັນສຳຄັນອັນໃຫຍ່ນັ້ນ."* ແລະອາດເປັນແນວນີ້ກໍໄດ້ ຈຶ່ງປາກົດໃຫ້ຂ້າພະເຈົ້າເຫັນພວກມັນຖືກລ່າມໂສ້ຄືແນວນັ້ນ, ແຕ່ຂ້າພະເຈົ້າກໍດີໃຈ ເພາະບໍ່ຕ້ອງການໃຫ້ພວກມັນມາຫາຂ້າພະເຈົ້າໄດ້....

ຂ້າພະເຈົ້າເລີ້ມຂຶ້ນສູງໄປຕື່ມອີກທາງອຸໂມງ ເພື່ອໜີຈາກແປວໄຟເຫລົ່ານັ້ນ. ບໍ່ດົນມັນກໍເລີ້ມມືດລົງກວ່າເກົ່າອີກ, ແຕ່ຂ້າພະເຈົ້າກໍຍັງສາມາດຫລຽວເຫັນບັນດາຜີຮ້າຍເຫລົ່ານີ້ທີ່ຢືນຢາຍລຽບກຳແພງນັ້ນຢູ່; ພວກມັນມີກຳລັງມະຫາສານອີຫລີ. ຂ້າພະເຈົ້າຄິດໃນໃຈວ່າ, *"ແມ່ນໃຜທີ່ຈະສາມາດຕໍ່ສູ້ກັບພວກຜີເຫລົ່ານີ້ໄດ້. ບໍ່ມີໃຜຕໍ່ສູ້ກັບສິ່ງເຫລົ່ານີ້ໄດ້ດອກ."* ຍັງບໍ່ໝົດເທົ່ານັ້ນ, ຄວາມຢ້ານນັ້ນມັນລົ້ນເຫລືອ ຫາບ່ອນປຽບບໍ່ໄດ້ອີຫລີ, ຂ້າພະເຈົ້າບໍ່ສາມາດຝືນສູ້ທົນກັບຄວາມຢ້ານນີ້ຕໍ່ໄປໄດ້ອີກແລ້ວ.

**ບໍ່ມີຄວາມຫວັງ:** ສິ່ງທີ່ຮ້າຍແຮງທີ່ສຸດໃນນະຣົກ, ຮ້າຍແຮງກວ່າການທົນທຸກທໍຣະມານນີ້ອີກ ກໍຄືການທີ່ເຮົາຮູ້ວ່າ ຍັງມີຄົນມາກມາຍມີຊີວິດຢູ່ບົນໂລກນີ້ ແລະພວກເຂົາສ່ວນຫລວງຫລາຍກໍບໍ່ຮູ້ແລະບໍ່ຄິດເລີຍວ່າ ຍັງມີອີກໂລກໜຶ່ງຢູ່ໃຕ້ແຜ່ນດິນໂລກນີ້. ພວກຄົນເຫລົ່ານີ້ບໍ່ຮູ້ເລີຍວ່າ ມີໂລກທີ່ແທ້ຈິງອີກໂລກໜຶ່ງຢູ່ໃຕ້ນີ້, ມີຄົນເປັນໂກດໆກຳລັງທົນທຸກທໍຣະມານຢູ່ທີ່ນັ້ນ ແລະຮ້ອງຂໍຄວາມເມດຕາ ເພື່ອໃຫ້ພວກເຂົາມີໂອກາດໄດ້ອອກຈາກທີ່ນັ້ນໄປ. ແຕ່ພວກເຂົາບໍ່ມີໂອກາດອອກຈາກທີ່ນັ້ນໄດ້ເລີຍ ແລະເສັຍໃຈໃຫ້ຕົນເອງທີ່ບໍ່ຍອມຮັບເອົາພຣະເຢຊູຄຣິດໃນຕອນທີ່ເຂົາຍັງມີໂອກາດຢູ່ນັ້ນ ຈຶ່ງເຮັດໃຫ້ພວກເຂົາຕ້ອງໄດ້ຄ້າງຢູ່ທີ່ນີ້ຕລອດໄປ. ສິ່ງທີ່ຮ້າຍແຮງຫລາຍທີ ສຸດກໍຄືບໍ່ມີຄວາມຫວັງທີ່ຈະໄດ້ອອກຈາກນະຣົກນັ້ນເລີຍ. ຂ້າພະເຈົ້າເຂົ້າໃຈແລະຮູ້ບ່ອນທີ່ເປັນນິຣັນການ ແລະຍັງສາມາດເຂົ້າໃຈໃນຄວາມເປັນຢູ່ຕລອດໄປນີ້ດ້ວຍ. ຢູ່ບົນໂລກນີ້, ພວກເຮົາບໍ່ຄ່ອຍເຂົ້າໃຈສະຖານທີ່ ທີ່ເປັນນິຣັນການນີ້ເທົ່າໃດ. ແຕ່ຂ້າພະເຈົ້າຮູ້ທີ່ນັ້ນດີວ່າມັນເປັນແນວໃດ, ຂ້າພະເຈົ້າອາດຢູ່ທີ່ນັ້ນຕລອດໄປ ແລະບໍ່ມີຄວາມຫວັງອອກຈາກທີ່ນັ້ນເລີຍກໍໄດ້. ຂ້າພະເຈົ້າຄິດເຖິງພັນຣະຍາ, ຂ້າພະເຈົ້າຄົງບໍ່ໄດ້ພົບກັບລາວອີກແລ້ວ. ຂ້າພະເຈົ້າເຄີຍບອກລາວຢູ່ສເມີວ່າ ຖ້າພວກເຮົາຈຳເປັນຕ້ອງໄດ້ພາກຈາກກັນ ບໍ່ວ່າຈະດ້ວຍແຜ່ນດິນໄຫວ ຫລືສິ່ງທີ່ເປັນຕາຢ້ານກົວປານໃດກໍຕາມ *"ຂ້ອຍຈະຕ້ອງກັບມາຫາເຈົ້າແລະຈະຫາເຈົ້າຈົນພົບໃຫ້ໄດ້. ຖ້າພວກເຮົາ ຫາກຈຳຕ້ອງພາກຈາກກັນ ຂ້ອຍກໍຈະຕ້ອງກັບມາຫາເຈົ້າຈົນໄດ້."* ແຕ່ຢູ່ໃນທີ່ນີ້ ຂ້າພະເຈົ້າກັບໄປຫາ ພັນຣະຍາບໍ່ໄດ້ຂ້າພະເຈົ້າຄົງບໍ່ໄດ້ເຫັນລາວອີກແລ້ວ, ແລະລາວກໍຄົງບໍ່ສາມາດຮູ້ໄດ້ເລີຍແມ້ແຕ່ນ້ອຍວ່າ ຂ້າພະເຈົ້າຢູ່ທີ່ໃດ, ຂ້າພະເຈົ້າຈະບໍ່ໄດ້ປາກໄດ້ເວົ້າກັບລາວອີກແລ້ວ. ຄວາມຄິດນີ້ມັນເຮັດໃຫ້ຂ້າພະເຈົ້າແສນເປັນທຸກຫລາຍທີ່ສຸດ - ບໍ່ສາມາດປາກເວົ້າກັບພັນຣະຍາ, ຕິດຕໍ່ກັບລາວບໍ່ໄດ້, ແລະລາວກໍບໍ່ຮູ້ວ່າ ຂ້າພະເຈົ້າຢູ່ໃສ ທັງບໍ່ມີຄວາມຫວັງຈະອອກຈາກທີ່ນີ້ໄປໄດ້ດ້ວຍ. ໃຫ້ທ່ານເຂົ້າໃຈວ່າ ທ່ານຈະອອກຈາກທີ່ນີ້ໄປບໍ່ໄດ້ຈັກເທື່ອ. ຢູ່ບົນໂລກນີ້ ຍັງມີຄວາມຫວັງຢູ່ສເມີ, ແມ້ແຕ່ຄົນທີ່ຢູ່ໃນຄ້າຍຄຸມຂັງກໍຫຍັງມີຄວາມຫວັງທີ່ຈະໄດ້ອອກຈາກທີ່ນັ້ນ ຫລືຢ່າງນ້ອຍກໍຕາຍໄປ ຊຶ່ງກໍເປັນວິທີໜຶ່ງໃນການໄດ້ອອກຈາກທີ່ນັ້ນ. ພວກເຮົາບໍ່ເຄີຍໄດ້ພົບກັບສະພາບທີ່ສິ້ນຫວັງຄືແນວນີ້ມາກ່ອນເລີຍ. ໃນພຣະທັມເອຊາຢາ 38:18 ເວົ້າວ່າ, *"ຜູ້ທີ່ລົງໄປສູ່ເຫວເລິກບໍ່ສາມາດຫວັງໃນ ຄວາມຄວາມສັດຊື່ຂອງພຣະເຈົ້າ."* ພຣະເຢຊູເທົ່ານັ້ນທີ່ເປັນຄວາມຈິງແລະເປັນຄວາມຫວັງຂອງພວກເຮົາ.

**ການຊົງປາກົດຕົວຂອງອົງພຣະເຢຊູ:** ເກືອບຈະເປັນເວລາທີ່ຂ້າພະເຈົ້າຍ່າງຂຶ້ນໄປທາງອຸບໂມງ, ຂ້າພະເຈົ້າມີຄວາມຢ້ານກົວອີຫລີ, ສູນສິ້ນຄວາມຫວັງ, ແລະຢ້ານກົວພວກຜີຮ້າຍເຫລົ່ານີ້ດ້ວຍ. ໃນທັນໃດນັ້ນເອງ, ອົງພຣະເຢຊູຄຣິດໄດ້ຊົງປາກົດຕົວຂຶ້ນ, *"ໂອ້, ສັນຣະເສີນອົງພຣະຜູ້ເປັນເຈົ້າ."* ແສງໄຟໄດ້ສ່ອງສວ່າງຂຶ້ນໃນທີ່ນັ້ນ. ຂ້າພະເຈົ້າເຫັນພຽງແຕ່ຮູບຮ່າງຂອງພຣະອົງ ເປັນຮູບຮ່າງຂອງມະນຸດ ແຕ່ບໍ່ອາດເຫັນໜ້າຂອງພຣະອົງ ເພາະແສງແຈ້ງໂພດ. ຂ້າພະເຈົ້າເບິ່ງເຂົ້າໄປໃນແສງແຈ້ງນີ້ ແລະເຫັນແຕ່ພຽງຮູບຮ່າງຂອງພຣະອົງ. ຂ້າພະເຈົ້າຄຸເຂົ່າລົງກັບພື້ນ. ຂ້າພະເຈົ້າເຮັດຫຍັງບໍ່ໄດ້ ມີແຕ່ນະມັສການພຣະອົງເທົ່ານັ້ນ. ຂ້າພະເຈົ້າຊາບຊຶ້ງໃນພຣະຄຸນຂອງພຣະອົງເຫລືອເກີນ. ວິນາທີໜຶ່ງກ່ອນໜ້ານີ້, ຂ້າພະເຈົ້າໄດ້ສູນສິ້ນທຸກຢ່າງ ແຕ່ພຽງບຶດດຽວເທົ່ານັ້ນ ຂ້າພະເຈົ້າກໍໄດ້ຫລຸດພົ້ນຈາກນະຣົກນີ້ແລ້ວ,

ນີ້ກໍເພາະວ່າ ຂ້າພະເຈົ້າຮູ້ຈັກກັບອົງພຣະເຢຊູຄຣິດເຈົ້ານັ້ນເອງ. ພວກຄົນອື່ນໆທີ່ຢູ່ໃນນະຣົກ ບໍ່ສາມາດອອກຈາກທີ່ນັ້ນໄດ້ ແຕ່ຂ້າພະເຈົ້າອອກຈາກທີ່ນັ້ນໄດ ້ເພາະຂ້າພະເຈົ້າໄດ້ຮັບຄວາມພົ້ນຈາກບາບກັມແລ້ວ. ຂ້າພະເຈົ້າຮູ້ແລະເຂົ້າໃຈດີວ່າ ບໍ່ມີຊ່ອງທາງໃດທີ່ຈະອອກຈາກສະຖານທີ່ນີ້ໄດ້ເລີຍ, ພຣະເຢຊູເປັນທາງດຽວທີ່ປ້ອງກັນບໍ່ໃຫ້ພວກເຮົາໄປສູ່ສະຖານທີ່ນີ້ໄດ້....

ເມື່ອຂ້າພະເຈົ້າຮວບຮວມສະຕິໄດ້, ຢ່າງນ້ອຍ ຂ້າພະເຈົ້າກໍເລີ້ມຄິດຂຶ້ນມາໄດ້, ຂ້າພະເຈົ້າຄິດໃນການທີ່ຈະຖາມອົງພຣະຜູ້ເປັນເຈົ້າ, ຂ້າພະເຈົ້າບໍ່ໄດ້ຖາມພຣະອົງແຮງໆ, ພຽງແຕ່ຄິດໃນໃຈເທົ່ານັ້ນ ພຣະອົງກໍຕອບຂ້າພະເຈົ້າແລ້ວ. ຂ້າພະເຈົ້າຖາມວ່າ, *"ເປັນຫຍັງອົງພຣະອົງຈຶ່ງສົ່ງຂ້ານ້ອຍມາໃນສະຖານທີ່ແຫ່ງນີ້? ພຣະອົງສົ່ງຂ້ານ້ອຍມາທີ່ນີ້ເຮັດຫຍັງ?"* ພຣະອົງຕອບວ່າ, *"ເພາະຄົນບໍ່ເຊື່ອວ່າມີບ່ອນແບບນີ້ຢູ່."* ພຣະອົງເວົ້າ ອີກວ່າ, *"ແມ້ກະທັ່ງໄພ່ພົນຂອງເຮົາເອງກໍຍັງບໍ່ເຊື່ອວ່າ ສະຖານທີ່ແບບນີ້ມີແທ້ອີຫລີ."* ຂ້າພະເຈົ້າຕົກຕະລຶງໃນຄຳເວົ້າຂອ'ພຣະອົ'. ຂ້າພະເຈົ້າຄິດວ່າ ຄຣິສຕຽນທຸກຄົນເຊື່ອໃນເຣື່ອ'ຂອ'ນະຣົກ. ແຕ່ມັນບໍ່ແມ່ນໝົດທຸກ ຄົນເຊື່ອຄວາມຈິງເຣື່ອງການເຜົາໄໝ້ໃນນະຣົກນີ້. ຂ້າພະເຈົ້າເວົ້າກັບອົງພຣະຜູ້ເປັນເຈົ້າວ່າ, *"ເປັນຫຍັງພຣະອົງຈຶ່ງເລືອກເອົາຂ້ານ້ອຍ?"* ແຕ່ພຣະອົງບໍ່ຕອບຄຳຖາມຂອງຂ້າພະເຈົ້າ. ຂ້າພະເຈົ້າບໍ່ຮູ້ເລີຍວ່າເປັນຫຍັງ ພຣະອົງຈຶ່ງເລືອກເອົາຂ້າພະເຈົ້າໄປທີ່ນັ້ນ. ຢ່າງນ້ອຍ ຂ້າພະເຈົ້າກໍອາດເໝາະສົມໄປໃນທີ່ແຫ່ງນີ້ກໍເປັນໄດ້....ພຣະອົງເວົ້ານຳຂ້າພະເຈົ້າອີກວ່າ, *"ຈົ່ງໄປບອກເຂົາວ່າ ເຮົາກຽດຊັ່ງສະຖານທີ່ແຫ່ງນີ້, ມັນບໍ່ແມ່ນຄວາມຕ້ອງການຂອງ ເຮົາທີ່ຈະໃຫ້ຜູ້ໃດຈາກການຊົງສ້າງຂອງເຮົາມາໃນສະຖານທີ່ນີ້ແມ້ແຕ່ຄົນດຽວ! ເຮົາບໍ່ໄດ້ສ້າງບ່ອນນີ້ສຳຣັບມະນຸດ. ສະຖານທີ່ນີ້ຖືກສ້າງຂຶ້ນມາເພື່ອມານຊາຕານແລະທູດສວັນຂອງພວກມັນ. ເຈົ້າຕ້ອງໄປ ໄປບອກພວກເຂົາ! ເຮົາໄດ້ໃຫ້ຄຳເວົ້າແກ່ເຈົ້າ, ເຈົ້າຈົ່ງໄປບອກເຂົາ."* ຂ້າພະເຈົ້າຄິດກັບຕົນເອງວ່າ, *"ພຣະອົງເຈົ້າເອີຍ, ພວກເຂົາບໍ່ເຊື່ອຂ້ານ້ອຍດອກ. ພວກເຂົາຈະຄິດວ່າ ຂ້ານ້ອຍເປັນບ້າຫລືຝັນຮ້າຍ."* .... ພຽງແຕ່ຄິດເທົ່ານັ້ນ ອົງພຣະຜູ້ເປັນເຈົ້າກໍຕອບຂ້າພະເຈົ້າວ່າ, *"ມັນບໍ່ແມ່ນທຸຣະຫຍັງຂອງເຈົ້າທີ່ຈະໄປເອົາຊະນະພວກເຂົາ. ມັນແມ່ນວຽກຂອງອົງພຣະວິນຍານບໍຣິສຸດ. ເຈົ້າຈົ່ງໄປແລະບອກພວກເຂົາເທົ່ານັ້ນ!"* ຂ້າພະເຈົ້າຕອບໃນໃຈວ່າ, *“ໂດຍເຈົ້ານາຍ! ແນ່ນອນທີ່ສຸດ, ຂ້ານ້ອຍຕ້ອງໄປແລະບອກພວກເຂົາ."* ທ່ານບໍ່ຄວນເປັນກັງວົນ ແລະຢ້ານວ່າມະນຸດຈະຄິດແນວໃດກັບທ່ານ, ທ່ານພຽງແຕ່ໄປແລະເຮັດຕາມ, ປ່ອຍສ່ວນທີ່ເຫລືອໃຫ້ເປັນພາຣະຂອງພຣະເຈົ້າ. ອາແມນ? ແລະຂ້າພະເຈົ້າເວົ້າໃນໃຈອີກວ່າ, *"ອົງພຣະຜູ້ເປັນເຈົ້າເອີຍ, ເປັນຫຍັງພວກຜີຊົ່ວຮ້າຍເຫລົ່ານັ້ນຈຶ່ງກຽດຊັງຂ້ານ້ອຍແທ້? ເປັນຫຍັງພວກມັນຈຶ່ງຊັງຂ້ານ້ອຍ?"* ພຣະອົງຊົງຕອບວ່າ, *"ເພາະວ່າເຈົ້າໄດ້ຖືກສ້າງ ຂຶ້ນມາຕາມລັກສະນະຂອງເຮົາ, ແລະພວກມັນກໍກຽດຊັງເຮົາ."* ເຈົ້າຮູ້ວ່າ ມານຮ້າຍບໍ່ສາມາດເຮັດຫຍັງຕໍ່ສູ້ພຣະເຈົ້າໄດ້. ມັນບໍ່ສາມາດທຳຮ້າຍພຣະເຈົ້າໄດ້, ແຕ່ມັນສາມາດທຳຮ້າຍການຊົງສ້າງຂອງພຣະອົງໄດ້. ດັ່ງນັ້ນ ມານຊາຕານຈຶ່ງກຽດຊັງມະນຸດ ແລະຫລອກລວງເຂົາໃຫ້ໄປນະຣົກກັບມັນໄດ້. ແລະມັນຍັງເປັນສາເຫດ ນຳເອົາພະຍາດມາສູ່ການຊົງສ້າງ ແລະບໍ່ວ່າສິ່ງໃດກໍຕາມທີ່ມັນສາມາດເຮັດໃຫ້ສິ່ງຊົງສ້າງຂອງພຣະເຈົ້າເຈັບປວດມັນກໍຈະເຮັດສິ່ງນັ້ນ.

**ສັນຕິສຸກຂອງພຣະເຈົ້າ:** ແລ້ວພຣະເຈົ້າກໍໄດ້ຖອກເທຄວາມຄິດຂອງພຣະອົງມາໃສ່ຂ້າພະເຈົ້າ. ພຣະອົງໃຫ້ຂ້າພະເຈົ້າໄດ້ສຳຜັດກັບຈິດໃຈສ່ວນໜຶ່ງຂອງພຣະອົງ ເພື່ອໃຫ້ເຫັນວ່າ ຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງຕໍ່ມວນມະນຸດນັ້ນເປັນແນວໃດ. ບໍ່ໜ້າເຊື່ອເລີຍ, ຂ້າພະເຈົ້າບໍ່ສາມາດຈັບຕ້ອງໄດ້, ມັນເກີດຂຶ້ນເອງໂລດ. ຄວາມຮັກທີ່ພຣະອົງຊົງມີໃຫ້ມະນຸດນັ້ນ ທ່ານບໍ່ສາມາດຈັບບາຍໄດ້ໃນຮ່າງກາຍນີ້. ພວກເຮົາຮູ້ດີ ໃນຄວາມຮັກທີ່ມີຕໍ່ພັນລະຍາແລະລູກໆນັ້ນມີຫລາຍຊໍ່າໃດ? ຄວາມຮັກມາກມາຍທີ່ພວກເຮົາມີນັ້ນ ບໍ່ສາມາດປຽບທຽບກັບຄວາມຮັກຂອງພຣະເຈົ້າທີ່ຊົງມີຕໍ່ພວກເຮົານັ້ນໄດ້ແມ້ແຕ່ນ້ອຍເລີຍ. ຄວາມຮັກຂອງພຣະອົງນັ້ນບໍ່ມີຂອບເຂດແລະບໍ່ມີທີ່ສິ້ນສຸດ ຍິ່ງໃຫຍ່ຫລາຍເທົ່າກວ່າຄວາມຮັກຂອງພວກເຮົາ ແລະຄວາມສາມາດທັງໝົດທີ່ເຮົາຈະຮັກໄດ້. ດັ່ງທີ່ກ່າວໄວ້ໃນພຣະທັມເອເຟໂຊ 3:19 ວ່າ, *"...ໃຫ້ຮູ້ຈັກຄວາມຮັກຂອງພຣະຄຣິດຊຶ່ງເກີນຄວາມຮູ້..."* ມັນເກີນກວ່າທີ່ທ່ານຈະຢັ່ງຮູ້ຫລືແມ້ແຕ່ຈັບຕ້ອງໄດ້. ຂ້າພະເຈົ້າບໍ່ຢາກເຊື່ອເລີຍວ່າ ພຣະອົງຊົງຮັກມວນມະນຸດໄດ້ຫລາຍຈົນສາມາດຕາຍແທນ ແມ້ແຕ່ຄົນພຽງຄົນດຽວ ເພື່ອບໍ່ໃຫ້ເຂົາໄປໃນນະຣົກນີ້, ແລະມັນທຳຮ້າຍຈິດໃຈຂອງພຣະອົງຢ່າງເຫລືອຫລາຍໃນການທີ່ເຫັນຄົນໃດຄົນໜຶ່ງທີ່ພຣະອົງໄດ້ຊົງສ້າງໄປໃນສະຖານທີ່ນີ້. ມັນເຮັດໃຫ້ພຣະອົງເຈັບປວດແສນສາຫັດ, ພຣະອົງຮ້ອງໄຫ້ເມື່ອເຫັນຄົນໆໜຶ່ງໄປທີ່ນັ້ນ. ຂ້າພະເຈົ້າສຸດເສົ້າໃຈຮ່ວມກັບພຣະອົງ. ຂ້າພະເຈົ້າໄດ້ສຳຜັດຫົວໃຈຂອງພຣະອົງ, ພຣະອົງປ່ອຍໃຫ້ຂ້າພະເຈົ້າໄດ້ແຕະຕ້ອງສ່ວນໜຶ່ງຂອງຫົວໃຈນັ້ນ. ພຣະອົງຊົງເສົ້າໂສກກັບຜູ້ທີ່ພຣະອົງຊົງສ້າງທີ່ກຳລັງໄປໃນສະຖານທີ່ນັ້ນ. ຂ້າພະເຈົ້າຄິດໃນໃຈວ່າ, *"ຂ້ອຍຕ້ອງອອກໄປ ແລະເປັນພະຍານດ້ວຍໝົດຈິດໝົດໃຈ ເພື່ອບອກແກ່ໂລກໃຫ້ຮູ້ເຖິງເຣື່ອງຂອງພຣະເຢຊູວ່າ ພຣະອົງຊົງເປັນພຣະເຈົ້າທີ່ແສນດີ."* ຂ້າພະເຈົ້າໝາຍຄວາມວ່າ ພວກເຮົາມີຂ່າວປະເສີດ - ຊຶ່ງເປັນຂ່າວດີ - ເປັນຂ່າວດີທີ່ໂລກບໍ່ຮູ້ຈັກ. ພວກເຮົາຕ້ອງບອກຂ່າວດີນີ້ແກ່ມວນມະນຸດ - ພວກເຮົາຕ້ອງຖ່າຍທອດຄວາມຮູ້ນີ້ໃຫ້ແກ່ພວກເຂົາ. ຝູງຄົນຂາດຄວາມຮູ້ຈັກກ່ຽວກັບເຣື່ອງນີ້ ແລະພຣະເຈົ້າຊົງຕ້ອງການໃຫ້ພວກເຮົາໄປບອກພວກເຂົາວ່າ ພຣະອົງນັ້ນຊົງແສນດີຊໍ່າໃດ ແລະພຣະອົງຊົງກຽດຊັງນະຣົກນັ້ນຊໍ່າໃດ. ພຣະອົງໄດ້ຊົງເວົ້າກັບຂ້າພະເຈົ້າວ່າ, *"ຈົ່ງບອກໃຫ້ເຂົາຮູ້ວ່າ ເຮົາກຳລັງຈະມາໃນໄວໆນີ້."* ແລະພຣະອົງຍັງໄດ້ບອກອີກວ່າ, *"ຈົ່ງບອກເຂົາວ່າ ເຮົາຈະມາໃນໄວໆນີ້"* ໃນດຽວນີ້ ຂ້າພະເຈົ້າຍັງຄິດວ່າ ເປັນຫຍັງຂ້າພະເຈົ້າຈຶ່ງບໍ່ໄດ້ຖາມພຣະອົງວ່າ, *"ອົງພຣະຜູ້ເປັນເຈົ້າ ພຣະອົງໝາຍຄວາມວ່າແນວໃດ? ໄວໆນັ້ນ ໄວປານໃດສຳຣັບພຣະອົງ?"...* ແຕ່ຂ້າພະເຈົ້າພັດບໍ່ໄດ້ຖາມ. ແຕ່ເຖິງຢ່າງໃດກໍຕາມ ທ່ານກໍຄົງຄິດບໍ່ອອກຄືກັນ ວ່າຈະຖາມພຣະອົງແບບນັ້ນ. ທ່ານມີແຕ່ຢາກນະມັສການພຣະອົງເທົ່ານັ້ນ. ສັນຕິສຸກຂອງພຣະເຈົ້າທີ່ປົກຄຸມທ່ານ ເມື່ອໄດ້ຢູ່ໃກ້ໆກັບພຣະອົງນັ້ນ ເປັນການທີ່ອະທິບາຍບໍ່ຖືກເລີຍ. ຂ້າພະເຈົ້າເຄີຍຢູ່ໃນບ່ອນນະມັສການທີ່ມີການຊົງເຈີມ ແຕ່ປຽບທຽບກັບຄວາມຮັກ ແລະສັນຕິສຸກຂອງພຣະເຈົ້າບໍ່ໄດ້ເມື່ອທ່ານຫາກໄດ້ຢູ່ໃກ້ໆກັບພຣະອົງ. ຈາກນັ້ນ ຂ້າພະເຈົ້າກໍໄດ້ຫລຽວຂຶ້ນເບິ່ງແລະໄດ້ເຫັນພວກຜີຮ້າຍເຫລົ່ານັ້ນທີ່ຝາກຳແພງ ພວກມັນໂຫດຮ້າຍທາຣຸນອີຫລີ, ພວກມັນຄືກັນກັບຝູງມົດໄຕ່ຢູ່ນຳຝາກຳແພງນັ້ນ. ພວກມັນຕັ້ງເບິ່ງຄືຝູງມົດອີຫລີ. ທັງໆທີ່ພວກມັນ ກໍຍັງໃຫຍ່ຢູ່ຄືເກົ່ານັ້ນແຫລະ. ແຕ່ເມື່ອມີຣິດອຳນາດຂອງ

ພຣະເຈົ້າຢູ່ໃກ້ໆທ່ານ, ດ້ວຍຣິດອຳນາດຍິ່ງໃຫຍ່ຂອງພຣະອົງນັ້ນ ເບິ່ງແລ້ວພວກເຂົາຈຶ່ງເປັນພຽງເໝືອນມົດໄຕ່ຝາເທົ່ານັ້ນ. ຂ້າພະເຈົ້າບໍ່ຢາກເຊື່ອແນວນັ້ນເລີຍຈຶ່ງຄິດໃນໃຈວ່າ, *"ອົງພຣະຜູ້ເປັນເຈົ້າ, ພວກມັນເປັນພຽງແຕ່ຝູງມົດເທົ່ານັ້ນ."* ແລະພຣະອົງຈຶ່ງເວົ້າວ່າ, *"ພຽງແຕ່ເຈົ້າສັ່ງຜູກມັດແລະຂັບໄລ່ພວກມັນອອກໄປໃນນາມຂອງເຮົາເທົ່ານັ້ນ."* ຂ້າພະເຈົ້າຄິດອີກວ່າ, *"ໂອ, ນີ້ແມ່ນຣິດອຳນາດທີ່ພຣະອົງຊົງປະທານແກ່ຄຣິສຕະຈັກ."*

ພວກມານຮ້າຍເຫລົ່ານີ້ໂຫດຮ້າຍອິຫລີ, ໂດຍປາສຈາກອົງພຣະເຢຊູແລ້ວ ພວກເຮົາສູ້ກັບພວກມັນບໍ່ໄດ້ເລີຍ. ພວກມັນທາຣຸນໂຫດຫ້ຽມ, ແຕ່ພວກມັນພັດບໍ່ມີຄວາມໝາຍ ຫຍັງໝົດສຳຣັບພຣະອົງ. ໃນທັນໃດນັ້ນ ຄວາມກະຕືລືລົ້ນໄດ້ເກີດຂຶ້ນກັບຂ້າພະເຈົ້າ, ເມື່ອເຫັນຜີຮ້າຍເຫລົ່ານີ້ ຂ້າພະເຈົ້າຈຶ່ງຮູ້ສຶກຢາກຈະເວົ້າ, *"ພວກສູ ຜີຮ້າຍທັງຫລາຍທີ່ທໍຣະມານຂົ່ມເຫັງກູ ພວກສູຍັງຢາກຈິກຊີ້ນກູອອກເປັນຕ່ອນໆອີກຢູ່ບໍ? ເຊີນເຂົ້າມາແມ! ມາດຽວນີ້ໂລດ!"* ບາງທີ ແນວຄິດຝ່າຍເນື້ອໜັງກໍເກີດຂຶ້ນກັບຂ້າພະເຈົ້າບຶດໜຶ່ງຫລືແນວໃດກໍບໍ່ຮູ້ ຈຶ່ງເຮັດໃຫ້ຂ້າພະເຈົ້າຄິດຢາກເວົ້າ, *"ພຣະເຢຊູ, ຈັດການກັບພວກມັນໂລດ."*

ອອກຈາກນະຣົກ: ເມື່ອພວກເຮົາອອກມາແລ້ວ, ພວກເຮົາຂຶ້ນສູງເໜືອໜ້າແຜ່ນດິນ, ເພາະພວກເຮົາຍັງຢູ່ໃນອຸໂມງ. ບໍ່ນານ ຂ້າພະເຈົ້າກໍບໍ່ສາມາດຈະຫລຽວເຫັນອຸໂມງນັ້ນອີກ, ແຕ່ເບິ່ງແລ້ວ ເປັນເໝືອນກັບລົມບ້າໝູ, ຄືກັບພວກເຮົາຢູ່ໃນລົມບ້າໝູທີ່ພັດແຮງໆ. ພວກເຮົາຂຶ້ນສູງໄປອີກ. ພວກເຮົາຕ້ອງໄດ້ຂຶ້ນສູງ ເພື່ອໃຫ້ເຫັນຢ່າງຊັດເຈນຂຶ້ນ. ເມື່ອຂຶ້ນເຖິງຈອມສຸດແລ້ວ, ຂ້າພະເຈົ້າກໍຫລຽວລົງ ມາເບິ່ງແຜ່ນດິນໂລກ.... ມັນ ເປັນຕາຢ້ານອິຫລ ີເມື່ອຫລຽວຄືນມາຍັງແຜ່ນດິນໂລກ! ຂ້າພະເຈົ້າຮູ້ວ່າ ພຣະເຈົ້າເຮັດໃຫ້ເປັນແນວນັ້ນກັບຂ້າພະເຈົ້າ.

ພຣະອົງສາມາດອອກຈາກອຸໂມງທາງໃດກໍໄດ້ຕາມທີ່ພຣະອົງຊົງຕ້ອງການ. ພຣະອົງຮູ້ຫົວໃຈຂອງ ຂ້າພະເຈົ້າດີວ່າ ຂ້າພະເຈົ້າກໍຄືເດັກນ້ອຍຄົນໜຶ່ງເທົ່ານັ້ນ. ຂ້າພະເຈົ້າຢາກຮູ້ຢາກເຫັນວ່າແຜ່ນດິນໂລກເປັນແນວໃດ ເມື່ອຫລຽວເບິ່ງຈາກທີ່ໄກໆ.... ຂ້າພະເຈົ້າໄດ້ແຕ່ຄິດວ່າມັນຄັກອິຫລີທີ່ເຫັນໂລກ ແລະເຫັນວ່າມັນບໍ່ໄດ້ແຂວນຫ້ອຍໄວ້ກັບສິ່ງໃດເລີຍ. ດັ່ງທີ່ພຣະຄັມພີເວົ້າໃນພຣະທັມໂຢບ 26:7 ວ່າ, *"ພຣະອົງຊົງພືທ້ອງຟ້າອອກສູ່ທາງ ທິດເໜືອ ແລະແຂວນໂລກໄວ້ເໜືອທີ່ວ່າງເປົ່າ."*

ເມື່ອທ່ານຫລຽວເບິ່ງ, ທ່ານກໍຄິດ, *"ແມ່ນຫຍັງຈ່ອງຄຶງສິ່ງນີ້ໄວ້? ແມ່ນຫຍັງທີ່ເຮັດໃຫ້ມັນກັບກາຍມາເປັນແນວນີ້ຢ່າງສົມບູນແບບ ບໍ່ມີທີ່ຕິໄດ້ເລີຍຢ່າງນີ້?"* ພຣະເຈົ້າຊົງຄວບຄຸມທຸກຢ່າງ. ຣິດອຳນາດຂອງພຣະເຈົ້າທີ່ຖ້ວມລົ້ນຂ້າພະເຈົ້າຢູ່ນັ້ນຊ່າງໜ້າຢຳເກງອິຫລີ. ພຣະອົງ

ມີຣິດອຳນາດເຫລືອລົ້ນອີຫລີ. ທຸກສິ່ງທຸກຢ່າງແມ່ນຢູ່ໃນການ ຄວບຄຸມຂອງພຣະອົງທັງນັ້ນ. ແມ້ແຕ່ຜົມເສັ້ນໜຶ່ງຂອງທ່ານທີ່ຫລົ່ນອອກຈາກຫົວຕົກລົງດິນ ພຣະອົງກໍຊົງຮູ້. ນົກຕົວດຽວຕົກລົງດິນ ພຣະອົງກໍຊົງຊາບ. ຂ້າພະເຈົ້າຖ້ວມລົ້ນດ້ວຍຄວາມຄິດເຫລົ່ານີ້. ພຣະເຈົ້າຊົງມີຣິດອຳ ນາດຍິ່ງໃຫຍ່ສູງສຸດ, ມັນເຕັມລົ້ນຢູ່ໃນຂ້າພະເຈົ້າອີຫລີ. ຂໍ້ພຣະຄຳໃນພຣະທັມເອຊາຢາ 40:22 ກ່າວເຖິງອົງພຣະຜູ້ເຈົ້າຊົງປະທັບ(ນັ່ງ)ເໜືອວົງກົມຂອງແຜ່ນດິນໂລກ. ບ່ອນທີ່ຂ້າພະເຈົ້າຢູ່ນັ້ນ ຂ້າພະເຈົ້າກໍຢູ່ທີ່ວົງກົມ ຂອງແຜ່ນດິນໂລກ. ຂ້າພະເຈົ້າຄິດແມ້ກະທັ້ງວ່າ, *"ອົງພຣະຜູ້ເປັນເຈົ້າ, ເປັນຫຍັງກ່ອນໜ້າຄຣິສຕອັບເຟີ ໂຄລັມບັສ ພວກເຂົາຈຶ່ງບໍ່ພາກັນ ອ່ານຂໍ້ພຣະຄັມພີນີ້, ເຂົາຈະໄດ້ຮູ້ວ່າແຜ່ນດິນໂລກນີ້ກົມ."* ທ່ານຮູ້ບໍ່ວ່າ ຄົນພາກັນສົງສັຍ, ພວກເຂົາຕ່າງກໍວ່າ ໜ່ວຍໂລກນີ້ແບນ? ແນວໃດກໍຕາມ, ພໍແຕ່ພວກເຮົາລົງມາຮອດລຸ່ມ ພວກເຮົາຕ້ອງໄດ້ຜ່ານໂລ່ກັ້ງບັງ; ຂ້າພະເຈົ້າຮູ້ວ່າພວກເຮົາຜ່ານແຜ່ນເຫລັກທີ່ຮ້ອນຫລາຍ ຊຶ່ງອ້ອມໂລກນີ້ໄວ້. ຂ້າພະເຈົ້າ ຍັງຄິດແບບໂງ່ໆ ທັງໆທີ່ມີອົງພຣະຜູ້ເຈົ້າຢູ່ນຳທີ່ນີ້, ຂ້າພະເຈົ້າຄິດວ່າ, *"ຂ້ອຍສົງສັຍວ່າ ພຣະອົງຈະຜ່ານແຜ່ນກັ້ງບັງນັ້ນໄປໄດ້ແນວໃດ?"* ທ່ານກໍຮູ້ວ່າ ການເຂົ້າໄປໃນອະວະກາດນັ້ນຕ້ອງເຂົ້າໄປໃນມຸມທີ່ພໍດີໂລດ. ພວກເຮົາຜ່ານເຂົ້າໄປໄດ້ໂດຍບໍ່ມີປັນຫາຫຍັງເລີຍ. ບໍ່ໜ້າແປກປະຫລາດຫຍັງດອກ! ຂ້າພະເຈົ້າແນ່ໃຈວ່າ ພຽງແຕ່ອົງພຣະຜູ້ເປັນເຈົ້າກະພິບຕາ ແລະເວົ້າວ່າ *"ເຮົາຈັດການກັບສິ່ງນີ້ໄດ້."* ພຣະຄຳຂອງພຣະເຈົ້າໃນພຣະທັມເພງສັນຣະເສີນ 47:9 ເວົ້າວ່າ, *"...ໂລ່ກັ້ງບັງຂອງແຜ່ນດິນໂລກເປັນຂອງ ພຣະເຈົ້າ..."* ພຣະອົງຊົງຄວບຄຸມທຸກສິ່ງ, ທຸກສິ່ງທຸກຢ່າງ. ຂ້າພະເຈົ້າບໍ່ຢາກໃຫ້ພຣະອົງຈາກໄປເລີຍ. ຂ້າພະ ເຈົ້າຕ້ອງການພຽງແຕ່ການຊົງສະຖິດຢູ່ຂອງພຣະອົງເທົ່ານັ້ນ. ພວກເຮົາມາເຖິງຮັດການີຟໍເນັຍຢ່າງໄວ. ຕັ້ງໄວອີຫລີ, ພວກເຮົາເຄື່ອນໄຫວຢ່າງວ່ອງໄວຫລາຍ, ແລະກໍມາເຖິງເຮືອນຂອງຂ້າພະເຈົ້າ. ຂ້າພະເຈົ້າສາມາດເບິ່ງເຫັນຜ່ານຫລັງຄາເຮືອນ ແລະກໍສາມາດເຫັນຕົວຂອງຂ້າພະເຈົ້າເອງນອນຢຽດຍາວຢູ່ບົນພື້ນຫ້ອງ. ສິ່ງນີ້ເຮັດໃຫ້ຂ້າພະເຈົ້າຕົກໃຈຢ່າງແຮງ, ຂ້າພະເຈົ້າໄດ້ເຫັນຕົນເອງຈາກເທິງພີ້ ຂ້າພະເຈົ້າເຫັນຮ່າງກາຍຂອງຂ້າພະເຈົ້ານອນຢຽດຍາວຢູ່ທີ່ນັ້ນແທ້ໆ ແລະຂ້າພະເຈົ້າຄິດວ່າ, *"ຜູ້ນັ້ນເປັນຂ້ອຍໄປບໍ່ໄດ້ດອກ, ຂ້ອຍເອງຢູ່ທີ່ນີ້, ຜູ້ນີ້ຈຶ່ງແມ່ນຂ້ອຍ!"* ທ່ານເອງກໍບໍ່ເຄີຍເຫັນຕົນເອງເປັນສອງຄົນຈັກເທື່ອ. ແຕ່ຂ້າພະເຈົ້າເຫັນຕົນເອງນອນຢຽດຍາວຢູ່ທີ່ນັ້ນ ແລະຂ້າພະເຈົ້າຍັງຄິດອີກວ່າ, *"ນັ້ນບໍ່ແມ່ນຕົວຈິງຂອງຂ້ອຍ."* ທ່ານໂປໂລເວົ້າໃນພຣະທັມ 2 ໂກຣິນໂທ 5:1 ວ່າ ພວກເຮົາພຽງອາສັຍຢູ່ໃນຜ້າເຕັນ(Tent) ເທົ່ານັ້ນ, ມັນສຽດແທງໃຈຂອງຂ້າພະເຈົ້າຢ່າງແຮງ. ຂ້າພະເຈົ້າໄດ້ແຕ່ຄິດ, *"ນັ້ນເປັນພຽງຜ້າເຕັນເທົ່ານັ້ນ, ບໍ່ມີຫຍັງເລີຍ, ມັນເປັນພຽງຊົ່ວຄາວ. ນີ້ແມ່ນຕົວຈິງຂອງຂ້ອຍ."* ຕົວຈິງ(ຈິດວິນຍານ)ນີ້ແຫລະ ທີ່ກ່ຽວກັບການເປັນຢູ່ຕລອດການ.

ມັນເຮັດໃຫ້ຂ້າພະເຈົ້າສະທ້ອນໃຈ ເມື່ອຮູ້ວ່າຊີວິດທີ່ພວກເຮົາເປັນຫ່ວງເປັນໃຍນຳຢ່າງຍິ່ງນີ້ ເປັນພຽງນ້ຳໝອກ, ຊີວິດນີ້ເປັນພຽງນ້ຳໝອກເທົ່ານັ້ນ, ພວກເຮົາເປັນພຽງນ້ຳໝອກ, ດັ່ງທີ່ກ່າວໄວ້ໃນພຣະທັມຢາໂກໂບ 4:14 ເວົ້າເຖິງຊີວິດຂອງພວກເຮົາວ່າ ມັນສັ້ນຊ່ຳໃດ, ມັນພຽງສັ້ນໆເທົ່ານັ້ນ. ຖ້າທ່ານສາມາດຢູ່ໄດ້ຮອດຮ້ອຍປີ ມັນກໍບໍ່ມີຫຍັງທັງໝົດ! ມັນປາກົດຢູ່ຊົ່ວຄາວເໝືອນນ້ຳໝອກ ແລ້ວກໍຫາຍໄປ. ຂ້າພະເຈົ້າຄິດ, *"ພວກເຮົາຕ້ອງມີຊີວິດຢູ່ເພື່ອພຣະເຈົ້າເທົ່ານັ້ນ."* ສິ່ງທີ່ພວກເຮົາເຮັດຢູ່ໃນຂະນີ້ ທີ່ນີ້ນັ້ນ ຖືວ່າເປັນການເຮັດເພື່ອການເປັນນິຣັນ. ພວກເຮົາຕ້ອງເປັນພະຍານ. ພວກເຮົາຕ້ອງ ກ້າວອອກໄປເພື່ອຊ່ວຍຜູ້ທີ່ຫລົງຫາຍ. ເຮົາບໍ່ອາດມົວເມົາເປັນກັງວົນນຳແຕ່ສິ່ງເລັກໆນ້ອຍໆທີ່ຂ້ອງຄາແລະຕິດ ຫ້ອຍຢູ່ນີ້ໄດ້, ພວກເຮົາຈຳເປັນຕ້ອງອອກຈາກການຢູ່ໃນສະພາບຢ່າງນັ້ນ ແລະອອກໄປປະກາດຂ່າວປະເສີດແລະຂ່າວດີ, ເພາະໂອກາດທີ່ຈະໄດ້ເຮັດສິ່ງນີ້ ແມ່ນຍັງເຫລືອນ້ອຍທີ່ສຸດ.

ຂ້າພະເຈົ້າໄດ້ເຫັນຮ່າງກາຍຂອງຕົວເອງນອນປຽດຍາວຢູ່ທີ່ພື້ນຫ້ອງຮັບແຂກນັ້ນ...ຮ່າງກາຍຊຶ່ງພຽງແຕ່ຢູ່ໃນໂລກນີ້ໄປພຽງວັນໆເທົ່ານັ້ນ, ແຕ່ຕົວຈິງຂອງຂ້າພະເຈົ້າຢູ່ທີ່ນີ້. ສິ່ງທີ່ຂ້າພະເຈົ້າຄິດໄດ້ກໍຄື, *"ໂອ, ອົງພຣະຜູ້ເປັນເຈົ້າ, ຂໍຢ່າຈາກຂ້ານ້ອຍໄປເລີຍ. ຂ້ານ້ອຍຕ້ອງການຢູ່ກັບພຣະອົງອີກ ພຽງນ້ອຍໜຶ່ງເທົ່ານັ້ນ."* ແຕ່ພຣະອົງກໍໄດ້ຈາກໄປ. ຂ້າພະເຈົ້າໄດ້ກັບເຂົ້າໄປສູ່ຮ່າງກາຍ, ຄ້າຍກັບວ່າ ຂ້າພະເຈົ້າຖືກດູດເຂົ້າໄປທາງຮູດັງ ຫລືທາງປາກ. ທັນທີທີ່ພຣະອົງຈາກໄປ, ຕອນນັ້ນແຫລະ ທີ່ຄວາມຢ້ານທັງໝົດໄດ້ມໍຣະສຸມເຂົ້າມາ, ທັງຄວາມທໍຣະມານ ແລະຄວາມທົນທຸກໄດ້ກັບຄືນເຂົ້າມາສູ່ແນວຄິດຂອງຂ້າພະເຈົ້າ. ພຣະທັມ 1 ໂຢຮັນ 4:18 ກ່າວວ່າ, *"ໃນຄວາມຮັກທີ່ສົມບູນນັ້ນບໍ່ມີຄວາມຢ້ານ...."* ຂ້າພະເຈົ້າໄດ້ຢູ່ຄຽງຂ້າງກັບຄວາມຮັກທີ່ສົມບູນຕລອດເວລາ, ເມື່ອອົງພຣະເຢຊູຜູ້ຊົງເປັນຄວາມຮັກທີ່ສົມບູນໄດ້ຈາກຂ້າພະເຈົ້າໄປ ຄວາມຢ້ານແລະບັນດາຄວາມຫວາດກົວທັງຫລາຍທີ່ໄດ້ຮັບຈາກນະຣົກນັ້ນ ກໍບຸກຈູ່ໂຈມເຂົ້າມາ, ຈິດໃຈຂອງຂ້າພະເຈົ້າຮູ້ສຶກຖືກບີບຄັ້ນຢ່າງແຮງ. ຂ້າພະເຈົ້າບໍ່ສາມາດ ຢູ່ໄດ້ກັບສິ່ງນີ້. ຂ້າພະເຈົ້າຮູ້ວ່າ ຮ່າງກາຍນີ້ ບໍ່ສາມາດຕໍ່ສູ້ກັບຄວາມຢ້ານປະເພດນີ້ໄດ້. ທ່ານບໍ່ສາມາດທົນຢູ່ກັບຄວາມກົດດັນແບບນີ້ໄດ້, ເພາະຮ່າງກາຍຂອງທ່ານບໍ່ແຂງແຮງພໍ. ຂ້າພະເຈົ້າຈຶ່ງອະທິຖານເພາະຍັງສາມາດອະທິຖານໄດ້ຢູ່, *"ຂໍຊົງເອົາສິ່ງນີ້ອອກຈາກຈິດໃຈຂອງຂ້ານ້ອຍດ້ວຍເທີ້ນ."* ຕາມທັມດາແລ້ວ, ທ່ານອາດຕ້ອງໄດ້ໄປຫາຈິຕະແພດ ຫລືຊອກຫາຄຳແນະນຳທຸກປະເພດເພື່ອຊ່ວຍໃຫ້ສາມາດຢູ່ກັບຄວາມຢ້ານກົວແບບອີກສັ່ນຂວັນຫາຍນີ້ໄດ້, ແຕ່ພຣະເຈົ້າກໍໄດ້ເອົາຄວາມຢ້ານກົວແບບສະເທືອນຂວັນນີ້ອອກໃນທັນທີທັນໃດໂລດ. ຂ້າພະເຈົ້າຊາບຊຶ້ງໃນພຣະຄຸນນີ້ເຫລືອເກີນ....

ຖ້າມີໃຜກໍຕາມຢູ່ທີ່ນີ້ໃນຄືນນີ້ຫາກຍັງບໍ່ຮູ້ຈັກກັບອົງພຣະຜູ້ເປັນເຈົ້າ, ພຣະເຢຊູຄຣິດ; ທ່ານຈຶ່ງຖາມຄຳ ຖາມນີ້ກັບຕົວທ່ານເອງເບິ່ງວ່າ, *"ຂ້ອຍກໍເຊື່ອຄົນເຫລົ່ານີ້ເວົ້າຢູ່ບໍ? ທີ່ພວກເຂົາເວົ້າມານັ້ນມັນເປັນຈິງແທ້ບໍ? ແລະພວກຄົນອື່ນໆທັງໝົດທີ່ຢູ່ທີ່ນີ້ພ້ອມທັງຕົວຂ້ອຍເອງກໍເຊື່ອຢູ່ບໍວ່າ ທີ່ພວກເຂົາເວົ້າມານັ້ນ ເປັນຄວາມຈິງ?"* ແຕ່ສຳຄັນທີ່ສຸດກວ່າສິ່ງອື່ນໃດໝົດກໍຄື ພຣະຄຳຂອງພຣະເຈົ້າເວົ້າເຖິງນະຣົກນີ້ວ່າແນວໃດ. ທ່ານຍັງຢາກຈະປ່ອຍໂອກາດ ແລະຍັງຢາກເວົ້າຢູ່ບໍວ່າ, *"ຂ້ອຍບໍ່ເຊື່ອດອກ, ຂ້ອຍບໍ່*

*ເຊື່ອວ່າສິ່ງນີ້ເປັນຄວາມຈິງ!"* ຖ້າເປັນເຊັ່ນນັ້ນ ທ່ານຈະຕ້ອງລືມພຣະຄຳຂອງພຣະເຈົ້າໃຫ້ໝົດ ແລະລືມທຸກຢ່າງ ທີ່ພວກເຮົາກຳລັງພະຍາຍາມບອກທ່ານໃນວັນນີ້. ທ່ານພ້ອມທີ່ຈະປ່ອຍໂອກາດໃນເຣື່ອງຄວາມ ເປັນນິຣັນທັງໝົດຂອງທ່ານນີ້ແທ້ບໍ? ສຳຣັບຂ້າພະເຈົ້າແລ້ວ ການເຮັດເຊັ່ນນີ້ ເປັນການກະທຳທີ່ບໍ່ສລາດເລີຍ. ທ່ານບໍ່ຄວນປ່ອຍໃຫ້ຜີມານວິນຍານຊົ່ວຫລອກລວງທ່ານ, ຜີຊົ່ວຮ້າຍຕົວໃຫຍ່ທີ່ກຳລັງຫົວສຽງດັງ ເຢາະເຢີ້ຍທີ່ທ່ານເຫັນໃນວີດີໂອນັ້ນ ຜີຕົວແບບນັ້ນແຫລະ ຈະຢູ່ກັບທ່ານ ເມື່ອທ່ານຫາກໄປນະຣົກ.

 ມັນຈະຫົວຂວັນທ່ານສຽງດັງ ເພາະທ່ານມີໂອກາດທີ່ຈະຮັບເອົາອົງພຣະເຢຊູຄຣິດ, ອົງພຣະຜູ້ເປັນເຈົ້າ, ແຕ່ທ່ານກໍປ່ອຍໃຫ້ໂອກາດນັ້ນພາດໄປ. ເມື່ອໃດກໍຕາມທີ່ທ່ານໄປທີ່ນັ້ນແລ້ວ, ທ່ານຈະຫັນກັບບໍ່ໄດ້ອີກ, ແນ່ນອນທີ່ສຸດວ່າ ທ່ານຫັນກັບຄືນບໍ່ໄດ້ເດັດຂາດ. ທ່ານຈະໄດ້ຢູ່ທີ່ນັ້ນຕລອດໄປ.

ທ່ານອາດຈະເວົ້າກັບຕົວເອງວ່າ, *"ຂ້ອຍດີທີ່ສຸດ, ຂ້ອຍເປັນຄົນທີ່ດີທີ່ສຸດຢູ່ແລ້ວ. ຂ້ອຍບໍ່ເໝາະສົມກັບບ່ອນແບບນັ້ນດອກ."* ແມ່ນ, ທ່ານອາດຈະເປັນຄົນດີທີ່ສຸດ ເມື່ອປຽບທຽບທ່ານເອງກັບຄົນອື່ນຫລາຍໆຄົນ. ແຕ່ທ່ານຈະສົມທຽບທ່ານເອງໃສ່ຄົນທົ່ວໄປບໍ່ໄດ້, ທ່ານຕ້ອງສົມທຽບພວກເຮົາເອງໃສ່ມາດຕະຖານຂອງພຣະເຈົ້າ. ມາດຕະຖານຂອງພຣະອົງນັ້ນສູງສົ່ງກວ່າຂອງພວກເຮົາເຫລືອຫລາຍ. ພຣະອົງໄດ້ກ່າວໄວ້ໃນພຣະຄຳຂອງພຣະອົງວ່າ ຖ້າທ່ານຫາກຕົວະພຽງແຕ່ຄັ້ງດຽວເທົ່ານັ້ນໃນຕລອດຊີວິດ ທ່ານກໍກາຍເປັນຄົນຂີ້ຕົວະແລ້ວ. ຖ້າທ່ານຫາກລັກສິ່ງໜຶ່ງສິ່ງໃດຄັ້ງດຽວໃນຊີວິດຂອງທ່ານ, ເຈັ້ຍພຽງແຜ່ນດຽວ, ລັກເວລາສອງສາມນາທີຈາກເຈົ້ານາຍໃນເວລາເຮັດວຽກ, ສິ່ງໃດກໍຕາມທີ່ທ່ານລັກພຽງຄັ້ງດຽວ ແລະແມ້ພຽງເລັກນ້ອຍ ທ່ານກໍກາຍເປັນຄົນຂີ້ລັກແລ້ວ. ທ່ານເຮັດພຽງແຕ່ຄັ້ງດຽວເທົ່ານັ້ນ, ທ່ານກໍກາຍເປັນຄົນບາບແລ້ວ, ທ່ານຈຶ່ງໄປສວັນບໍ່ໄດ້. ເຫັນບໍວ່າ ພວກເຮົາດີຄົບບໍຣິບູນບໍ່ໄດ້. ພວກເຮົາດີສົມບູນບໍ່ໄດ້ຈຶ່ງບໍ່ສາມາດໄປສວັນໄດ້ດ້ວຍການກະທຳດີຂອງເຮົາເອງ. ພຣະທັມຕິໂຕ 3:5 ເວົ້າວ່າ, *"ພຣະອົງໄດ້ຊົງຊ່ອຍເຮົາໃຫ້ພົ້ນ ບໍ່ແມ່ນຍ້ອນການກະທຳທີ່ຊອບທັມຂອງເຮົາເອງ...."* ອາແມນ, ການສົມທຽບນັ້ນ ຂຶ້ນກັບເຮົາເອງວ່າ ເຮົາຈະສົມທຽບແບບໃດກັນແທ້....ດັ່ງນັ້ນ ພວກເຮົາຈຳເປັນຕ້ອງສົມທຽບເຮົາເອງໃສ່ກັບພຣະເຈົ້າ. ມາຕະຖານຂອງພຣະອົງກັບຂອງພວກເຮົານັ້ນແຕກຕ່າງກັນປານແຜ່ນ ຟ້າກັບແຜ່ນດິນ. ພວກເຮົາຈຳເປັນຕ້ອງມີພຣະຜູ້ຊ່ອຍໃຫ້ພົ້ນບາບກັມ. ພວກເຮົາໄປສວັນດ້ວຍຕົວເຮົາເອງບໍ່ໄດ້, ພຣະເຈົ້າໃຫ້ຂອງພຣະຣາຊທານນີ້ລ້າໆ, ພຣະອົງເວົ້າໃນພຣະທັມໂຢຮັນ 14:6 ວ່າ, *"ເຮົານີ້ແຫລະເປັນທາງ ນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ."* ພຣະອົງເປັນທາງດຽວເທົ່ານັ້ນທີ່ຈະຫລີກເວັ້ນຈາກນະຣົກໄດ້....

ດັ່ງນັ້ນ ໃຜກໍຕາມທີ່ບໍ່ຮູ້ຈັກກັບພຣະເຢຊູ, ຫລືບໍ່ເຄີຍຂໍໃຫ້ພຣະເຢຊູມາເປັນພຣະຜູ້ເປັນເຈົ້າແລະເປັນພຣະ ຜູ້ໂຜດໃຫ້ພົ້ນໃນຊີວິດຢ່າງຈິງຈັງຈັກເທື່ອ....ຈົ່ງເວົ້າອອກສຽງແລະຂໍໃຫ້ພຣະອົງເຂົ້າມາໃນຊີວິດຂອງ ທ່ານ.... ຢ່າປ່ອຍໃຫ້ຜີມານຊາຕານຫົວຂວັນທ່ານໄດ້, ພວກຜີຮ້າຍເຫລົ່ານີ້ກຳລັງຫົວຂວັນທ່ານຢູ່.... ເມື່ອມີໂອກາດກໍຈົ່ງຍອມຮັບເອົາພຣະອົງເທີ້ນ ເພາະທ່ານບໍ່ຮູ້ວ່າທ່ານຈະຢູ່ໃນໂລກນີ້ໄດ້

ດົນອີກປານໃດ. ທ່ານບໍ່ຮູ້ດອກວ່າ ທ່ານອາດຈະຕາຍພາຍໃນມື້ອື່ນກໍໄດ້ ແລະໄປຢູ່ໃນສະຖານທີ່ທີ່ທ່ານບໍ່ຕ້ອງການຢາກຈະໄປນີ້. ຂ້າພະເຈົ້າຢາກຈະບອກທ່ານອີກວ່າ, ສະຖານທີ່ນັ້ນ ແມ້ແຕ່ຄວາມຮ້ອນພຽງຢ່າງດຽວກໍເຫລືອທີ່ຈະທົນແລ້ວ....ນັກວິທຍາສາດໄດ້ບອກວ່າ ໃນໃຈກາງໂລກນັ້ນ ຄວາມຮ້ອນມີເຖິງ 12,000 ອົງສາ ແລະທ່ານຕ້ອງໄດ້ທົນທຸກທໍຣະມານຢູ່ທີ່ນັ້ນຕລອດໄປ. ຖ້າທ່ານຄິດຈະຜ່ານຜ່າກັບສິ່ງນີ້, ເປັນການບໍ່ສລາດຈັກດີ້ເລີຍທີ່ຈະເຮັດແນວນັ້ນ. ເຖິງເວລາແລ້ວ ພີ່ນ້ອງ....

** ພຣະຄັມພີນັ້ນຮຽບງ່າຍ, ພວກເຮົາທຸກຄົນເປັນຄົນບາບ, ແລະຖ້າຜູ້ໃດຫາກຮ້ອງອອກພຣະນາມຂອງອົງ ພຣະຜູ້ເປັນເຈົ້າກໍຈະຣອດພົ້ນ. ພຣະເຢຊູກ່າວໄວ້ວ່າ ຖ້າທ່ານຫາກຍອມຮັບເຮົາຕໍ່ໜ້າມະນຸດ, ຝ່າຍເຮົາກໍຈະຍອມຮັບທ່ານຕໍ່ໜ້າພຣະບິດາຜູ້ຊົງສະຖິດຢູ່ຟ້າສວັນ ແລະຕໍ່ໜ້າຝູງເທວະດາຜູ້ບໍຣິສຸດດ້ວຍເຊັ່ນດຽວກັນ. ແຕ່ຖ້າທ່ານຫາກປະຕິເສດເຮົາຕໍ່ໜ້າມະນຸດ, ເຮົາກໍຈະປະຕິເສດທ່ານຕໍ່ໜ້າພຣະບິດາຂອງເຮົາເໝືອນກັນ.... ຖ້າທ່ານຫາກບໍ່ເຄີຍປະກາດຕົວຕໍ່ໜ້າຝູງຊົນ, ຖ້າທ່ານບໍ່ເຄີຍປະກາດຕໍ່ສາທາຣະນະຊົນວ່າ ອົງພຣະເຢຊູຄຣິດເປັນພຣະຜູ້ຊ່ອຍໃຫ້ຣອດຂອງທ່ານ, ແລະບໍ່ເຄີຍໃຫ້ພຣະອົງເປັນອົງພຣະຜູ້ເປັນເຈົ້າໃນຊີວິດຂອງທ່ານຈັກເທື່ອ, ຫລືຖ້າທ່ານຫາກບໍ່ແນ່ໃຈວ່າ ສວັນຈະເປັນບ່ອນຢູ່ຖາວອນຂອງທ່ານ, ຈົ່ງຈື່ຈຳສິ່ງທີ່ອົງພຣະເຢຊູໄດ້ຖືກຕອກຕຶງ ແຂວນເປືອຍກາຍຢູ່ເທິງໄມ້ກາງແຂນ, ໃນສະຖານທີ່ຊຸມນຸມຊົນ, ພຣະອົງໄດ້ຖືກແຂວນໄວ້ທີ່ນັ້ນເພື່ອທ່ານ, ພຣະອົງຍອມທົນທຸກເພື່ອຄວາມອາຍຂອງທ່ານ.

ຖ້າທ່ານຫາກອະທິຖານຕາມຄຳອະທິຖານນີ້ຈາກສ່ວນເລິກຂອງຈິດໃຈທ່ານ, ພຣະເຈົ້າຈະຊົງໂຜດວິນຍານຂອງ ທ່ານໃຫ້ຣອດພົ້ນ, ແລະພຣະອົງຈະຊົງປະທານໂອກາດໃຫ້ທ່ານໄດ້ເປີດເຜີຍຕໍ່ສາຣະນະຊົນໃນອະນາ ຄົດໃກ້ໆນີ້. ຂໍໃຫ້ທ່ານອະທິຖານຕາມດັ່ງຕໍ່ໄປນີ້,

*"ຂ້າແດ່ພຣະເຈົ້າ ຂ້ານ້ອຍເຊື່ອໃນພຣະອົງ. ພຣະອົງເປັນພຣະຜູ້ຊົງສ້າງ. ຂ້ານ້ອຍເປັນຄົນບາບ. ຂ້ານ້ອຍໄດ້ເຮັດຜິດບາບຫລາຍຢ່າງ ທັງເຈຕນາແລະບໍ່ເຈຕະນາ. ຂ້ານ້ອຍຂາດຈາກພຣະຣັສມີຂອງພຣະອົງ. ຂ້ານ້ອຍບໍ່ມີຕາປະທັບຂອງພຣະອົງ. ຂ້ານ້ອຍເປື້ອນເປິ ດ່າງພ້ອຍດ້ວຍບາບ. ອົງພຣະເຢຊູເຈົ້າ ຂ້ານ້ອຍເຊື່ອໃນພຣະອົງ. ພຣະອົງເປັນພຣະບຸດຂອງພຣະເຈົ້າທີ່ຊົງພຣະຊົນຢູ່ຕລອດການ. ພຣະອົງເປັນແກະຂອງພຣະເຈົ້າຜູ້ຊົງຮັບເອົາບາບຂອງມະນຸສໂລກໄປ, ຜູ້ຊົງຮັບເອົາບາບຂອງຂ້ານ້ອຍໄປ. ຂ້ານ້ອຍເຊື່ອວ່າ ພຣະອົງໄດ້ຊົງຕາຍຢູ່ເທິງກາງແຂນເພື່ອໄຖ່ບາບແທນຂ້ານ້ອຍ. ຂໍຊົງໄດ້ຫລັ່ງພຣະໂລຫິດທີ່ບໍຣິສຸດຂອງພຣະອົງເພື່ອວິນຍານທີ່ຜິດບາບຂອງຂ້ານ້ອຍດ້ວຍ. ຂ້ານ້ອຍເຊື່ອວ່າ ພຣະອົງໄດ້ຊົງຖືກຝັງໄວ້ ແລະໃນວັນທີສາມ ພຣະອົງເຈົ້າໄດ້ຟື້ນຄືນມາຈາກຕາຍ ແລະພຣະອົງຊົງພຣະຊົນຢູ່ຕລອດໄປເປັນນິດ. ຂ້ານ້ອຍເອີ້ນວ່າ ພຣະອົງເປັນພຣະຜູ້ໂຜດໃຫ້ພົ້ນຂອງຂ້ານ້ອຍ. ຂ້ານ້ອຍຂໍມອບຊີວິດໃຫ້ແກ່ພຣະອົງ. ຂ້ານ້ອຍຈະຮັກພຣະອົງ ແລະຈະຮັບໃຊ້ພຣະອົງຕລອດຊີວິດຂອງຂ້ານ້ອຍທີ່ຍັງເຫລືອຢູ່ນີ້. ຂ້ານ້ອຍເປັນຂອງພຣະອົງ, ສ່ວນທີ່ດີ, ສ່ວນທີ່ບໍ່ດີ, ສ່ວນທີ່ບາບ, ແຜນການທຸກຢ່າງແລະຄວາມຝັນທຸກສິ່ງຂອງຂ້ານ້ອຍ ຂ້ານ້ອຍຂໍມອບໃຫ້ແກ່ພຣະອົງ. ພຣະອົງຈະຊົງກະທຳໃຫ້ສຳເຣັດໃນຂ້ານ້ອຍ. ຂ້ານ້ອຍເຊື່ອວ່າຂ້ານ້ອຍລອດພົ້ນຈາກບາບກັມແລ້ວ, ບໍ່ແມ່ນດ້ວຍການກະທຳດີຂອງຂ້ານ້ອຍ ແຕ່ດ້ວຍການເຊື່ອ*

*ຟັງພຣະອົງ. ໃນພຣະນາມພຣະເຢຊູຄຣິດເຈົ້າ, ເອເມນ."*

ເປັນພຣະຄຸນຢ່າງຍິ່ງທີ່ພວກທ່ານໃຫ້ການຕອບສນອງເປັນທີ່ໜ້າພໍໃຈອີຫລີ. ພຣະຄັມພີເວົ້າວ່າ ບໍ່ມີຄວາມຍິນດີໃດຍິ່ງໃຫຍ່ໃດໄປກວ່າຄົນບາບຄົນກັບໃຈໃໝ່. ພວກເຮົາພຽງແຕ່ຮູ້ຢ່າງຜີວເຜີນເທົ່ານັ້ນວ່າ ມີສິ່ງໃດແດ່ເກີດຂຶ້ນຢູ່ໃນສວັນກ່ຽວກັບການກະທຳຂອງທ່ານໃນວັນນີ້. ຂ້າພະເຈົ້າຢາກຈະເວົ້າກັບທ່ານທີ່ຍັງຢູ່ໃນທີ່ນີ້ ກ່ອນທີ່ຈະຈົບລົງ ຄືຂ້າພະເຈົ້າຢາກຂໍເຊີນພວກທ່ານທີ່ໄດ້ຮັບເອົາຄຳພະຍານໃນວັນນີ້ຍ່າງອອກມາຕໍ່ໜ້າແທ່ນມະນັສ ການ. ພວກເຮົາຖືວ່າເປັນພຣະພອນອີຫລີທີ່ ບິລ ວາຍສ໌ ເວົ້າເຖິງປະສົບການຂອງເພິ່ນສູ່ພວກເຮົາຟັງໃນວັນນີ້.ຂ້າພະເຈົ້າຢາກຈະທ້າທາຍກັບພີ່ນ້ອງ, ແຕ່ຂໍບອກລ່ວງໜ້າໄວ້ກ່ອນວ່າ ຢ່າຍອມຮັບເອົາສິ່ງນີ້ຖ້າທ່ານຫາກບໍ່ພ້ອມເທື່ອທີ່ຈະເຮັດຕາມບາງການເຄື່ອນໄຫວຂອງອົງພຣະວິນຍານບໍຣິສຸດແລະຮັບເຂົ້າມາໃນຊີວິດຂອງທ່ານໄດ້ເທື່ອ. ຂ້າພຣະເຈົ້າບໍ່ໄດ້ເວົ້າຢອກຫລິ້ນ, ແຕ່ກຳລັງຈະບອກທ່ານວ່າ ຢ່າຮັບເອົາສິ່ງນີ້ເປັນຄຳສາຣະພາບຂອງທ່ານ ຍົກເວັ້ນແຕ່ທ່ານຈະຈິງຈັງກັບສິ່ງນີ້ອີຫລີເທົ່ານັ້ນ. ສິ່ງນີ້ຖືກແບ່ງອອກເປັນສອງພາກສ່ວນຄື: ໜຶ່ງ, ຂ້າພະເຈົ້າຈະບໍ່ຢ້ານມະນຸດໜ້າໃດ ສິ່ງໃຫຍ່ທີ່ຍັບຍັ້ງເຮົາໄວ້ໄດ້ກໍຄື ເຮົາຮູ້ວ່າ ມີສວັນແລະມີນະຣົກບຶງ ໄຟ, ຂ້າພະເຈົ້າຈຶ່ງບໍ່ຢ້ານມະນຸດໜ້າໃດອີກຕໍ່ໄປແລ້ວ.

ສອງ, ຕລອດຊີວິດທີ່ຍັງເຫລືອຢູ່ໃນໂລກນີ້ ຂ້າພະເຈົ້າຈະບອກເຣື່ອງຂອງອົງພຣະເຢຊູຄຣິດ, ເຣື່ອງຂອງສວັນ, ແລະເຣື່ອງຂອງນະຣົກກັບທຸກໆຄົນທີ່ຂ້າພະເຈົ້າຮູ້ຈັກ. ນີ້ເປັນຄຳປະຕິຍານຖວາຍຕົວທີ່ຍິ່ງໃຫຍ່ທີ່ສຸດ. ທຸກຄົນທີ່ຂ້າພະເຈົ້າຮູ້ຈັກທີ່ໄດ້ນຳເອົາເຣື່ອງພຣະເຢຊູຄຣິດໄປບອກຄົນອື່ນນັ້ນ ກໍມາຈາກສອງຈຸດຂອງຄຳປະຕິຍານຕົວນີ້ທັງນັ້ນ. ເປັນຫຍັງຈຶ່ງຕ້ອງມີຄວາມສຳພັນກັບຄົນ ຖ້າບໍ່ຢາກບອກເຂົາກ່ຽວກັບຂ່າວດີທີ່ເຕັມລົ້ນໄປດ້ວຍພຣະສງ່າຣາສີນີ້ ເພື່ອໄຖ່ເອົາວິນຍານຂອງພວກເຂົາອອກຈາກບຶງໄຟນະຣົກ.

ມັນຈະເປັນຄວາມຜິດຢູ່ໃນວິນຍານທີ່ເຮົາຈະຮູ້ຜູ້ໃດຜູ້ໜຶ່ງ, ເວົ້າລົມກັບເຂົາ, ມ່ວນຊື່ນກັບພວກເຂົາ, ດີໃຈທີ່ພົບກັບເຂົາ, ແຕ່ບໍ່ເຄີຍບອກເຂົາໃຫ້ຮູ້ກ່ຽວກັບຂ່າວດີນີ້ເລີຍ, ປາສຈາກພຣະເຢຊູຄຣິດແລ້ວ ພວກເຂົາກໍຈະໄປສູ່ບຶງ ໄຟນະຣົກຢ່າງແນ່ນອນ. ຄວາມສັມພັນທຸກຢ່າງເປັນປະຕູເຂົ້າອອກໃນການສົນທະນາກ່ຽວກັບຄວາມຈິງທີ່ທ່ານໄດ້ຮັບຈາກການເປັນພະຍານໃນມື້ນີ້... ຖ້າທ່ານຫາກຍັງບໍ່ພ້ອມຈະເຮັດໄດ້ເທື່ອນັ້ນ, ຂ້າພະເຈົ້າກໍເຂົ້າໃຈ. ແຕ່ຖ້າທ່ານຫາກພ້ອມແລ້ວທີ່ຈະເຮັດຕາມຄຳປະຕິຍານຖວາຍຕົວທັງສອງຢ່າງນີ້ແລ້ວ ກໍຈົ່ງເວົ້າກັບພຣະເຈົ້າດັ່ງນີ້, *"ຂ້າແດ່ພຣະເຈົ້າ ຂ້ານ້ອຍເຊື່ອໃນພຣະອົງ. ຂ້ານ້ອຍເຊື່ອໃນພຣະເຢຊູພຣະບຸດ ແລະພຣະວິນຍານບໍຣິສຸດຂອງພຣະອົງ. ຂ້ານ້ອຍຂໍຍອມຮັບເອົາການທ້າທາຍນັບແຕ່ຊົ່ວໂມງນີ້ເປັນຕົ້ນໄປ. ຂ້ານ້ອຍຂໍປະກາດຕົວເອງ, ນີ້ເປັນການຍອມຮັບຂອງຂ້ານ້ອຍ. ຂ້ານ້ອຍຈະບໍ່ຢ້ານມະນຸດໜ້າໃດອີກແລ້ວ. ຂ້ານ້ອຍຈະບໍ່ສົນນຳຄວາມ ຄິດຄວາມເຫັນຂອງມະນຸດອີກ. ຊື່ສຽງຈະບໍ່ມີຄວາມສຳຄັນຫຍັງສຳຣັບຂ້ານ້ອຍ. ຂ້ານ້ອຍກຽດຊັງຄວາມຂີ້ຢ້ານຂອງມະນຸດ. ຕລອດຊີວິດທີ່ຍັງເຫລືອຂອງຂ້ານ້ອຍນີ້ ຂ້ານ້ອຍຈະບອກທຸກຄົນທີ່ຂ້ານ້ອຍຮູ້ໃຫ້ພວກເຂົາຮູ້ຈັກກ່ຽວກັບເຣື່ອງຂອງພຣະເຢຊູ ຜູ້ຊົງອົງພຣະຜູ້ເປັນເຈົ້າ, ຈະບອກພວກເຂົາກ່ຽວກັບກ່ຽວກັບສວັນ ແລະກ່ຽວກັບສະຖານ*

ທີ່ຖືກເອີ້ນວ່າ "ນະຣົກ". ຂ້ານ້ອຍຢຽບເສັ້ນໄຊແລ້ວ. ຂ້າຂ້ອຍບໍ່ຄືເກົ່າ, ບໍ່ຫວັ່ນໄຫວ, ບໍ່ຫ່ວງໄຍນຳສິ່ງໃດອີກແລ້ວ. ຂ້ານ້ອຍຍອມຮັບເອົາພຣະຄຳຂອງພຣະອົງ. ຂ້ານ້ອຍຈະບໍ່ຢ້ານກົວແລະຈະບໍ່ມິດງຽບຢູ່ຕໍ່ໄປອີກແລ້ວ.ນີ້ແມ່ນການຍອມຮັບຄຳສາຣະພາບຂອງຂ້ານ້ອຍຕໍ່ພຣະເຈົ້າອົງສູງສຸດ. ຂ້າແດ່ພຣະເຈົ້າ ຂໍຊົງຍົກກຳລັງຂອງພຣະອົງຂຶ້ນດ້ວຍເຖີດ, ຍົກຂຶ້ນເໜືອເມືອງນີ້, ຊົນຊາດນີ້, ເໜືອໂລກນີ້, ແລະເໜືອຝູງຄົນຊຶ່ງຫາກໍຮູ້ໄດ້ເຖິງການເວລາທີ່ເຂົາດຳເນີນຊີວິດຢູ່ໃນໂລກນີ້ ຮວມທັງຝູງຄົນທີ່ກຳລັງຈະເຂົ້າໃຈເຖິງຄວາມເປັນນິຣັນໃນອີກບໍ່ເທົ່າໃດນາທີຂ້າງໜ້ານີ້ ຊຶ່ງຈະເຫັນແຈ້ງເຂົ້າເຖິງພຣະສງ່າຣາສີຂອງສວັນ ແລະຄວາມເປັນຕາຢ້ານຂອງນະຣົກ, ເພື່ອພວກເຂົາຈະໄດ້ຈັດລຳດັບການເຊື່ອຟັງພຣະເຈົ້ານັ້ນ ໃຫ້ມີຄວາມສຳຄັນກວ່າສິ່ງອື່ນໃດ. ຂ້າແດ່ ພຣະເຈົ້າ, ບັດນີ້ ພວກຂ້ານ້ອຍຂູບຂໍພຣະກະຣຸນາຄຸນ, ພວກເຂົາໄດ້ຍອມຮັບເອົາຄຳສາຣະພາບນີ້ຢ່າງຈິງຈັງ. ປາສຈາກພຣະຄຸນຂອງພຣະອົງແລ້ວ ພວກຂ້ານ້ອຍກໍເຮັດສິ່ງໃດບໍ່ໄດ້ເລີຍ. ພວກຂ້ານ້ອຍເຊື່ອໃນພຣະຄຸນທີ່ລົ້ນເຫລືອຂອງພຣະອົງ ຊຶ່ງພຣະຄຳຂອງພຣະເຈົ້າບອກໃຫ້ພວກຂ້ານ້ອຍກະທຳນັ້ນ. ພຣະສີຣິ, ພຣະຄຸນ, ແລະພຣະກະຣຸນາຄຸນຂອງພຣະອົງເຈົ້າຢູ່ເທິງໄພ່ພົນຂອງພຣະອົງໃນທີ່ນີ້ດ້ວຍເທີ້ນ, ໃນພຣະນາມພຣະເຢຊູຄຣິດເຈົ້າ, ອາແມນ."